ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

05-08 ຕຸລາ 2022
ປີທີ 11
ສະບັບທີ 881


## ປະທານ ສພຊ ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງບັນດາເອກອັກຄະລັດຖະທູດ ແຫ່ງ ສປປລາວ



(ສພຊ) ວັນທີ 3 ທັນວາ 2022 ທີ່ສະພາແຫ່ງຊາດ, ທ່ານ ປອ. ໄຊສົມພອນ ພົມວິຫານ ປະທານສະພາແຫ່ງຊາດ ໄດ້ຕ້ອນຮັບການເຂົ້າຢ້ຽມຂ່ຳນັບຂອງບັນດາທ່ານເອກອັກຄະລັດຖະທູດ ແຫ່ງ ສປປລາວ ທີ່ຈະໄປປະຈຳການຢູ່ຕ່າງປະເທດ ເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ບັນດາທ່ານເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປລາວ ທີ່ຖືກແຕ່ງຕັ້ງຈາກປະທານປະເທດໃຫ້ໄປປະຕິບັດໜ້າທີ່ຢູ່ຕ່າງປະເທດຕາມລັດຖະດຳລັດຂອງປະທານປະເທດ; ການແຕ່ງຕັ້ງດັ່ງກ່າວສະແດງເຖິງຄວາມໄວ້ວາງໃຈ, ຄວາມເຊື່ອໝັ້ນຕໍ່ຄວາມຮັບຜິດຊອບໃນໜ້າທີ່ການເມືອງ, ຄວາມຮູ້ຄວາມສາມາດ, ບົດບາດ ແລະ ປະສົບການຂອງບັນດາທ່ານເອກອັກຄະລັດຖະທູດວິສາມັນຜູ້ມີອຳນາດເຕັມ ແຫ່ງ ສປປລາວ ພັກ, ລັດຖະບານ ແລະ ປະຊາຊົນລາວ ມອບໜ້າທີ່ອັນສຳຄັນໃຫ້ບັນດາທ່ານເປັນຜູ້ຕາງໜ້າທາງການຂອງ ສປປ ລາວ ຢູ່ຕ່າງປະເທດ ແມ່ນກຽດອັນສູງສົ່ງ, ທັງເປັນຄວາມຮັບຜິດຊອບໃນການນຳເອົາແນວທາງການຕ່າງປະເທດຂອງລາວ ກໍຄືສະພາບຄວາມເປັນຈິງຂອງປະເທດ ໄປເຜີຍແຜ່ໃຫ້ຕ່າງປະເທດຮູ້ ແລະ ເຂົ້າໃຈເຖິງຄວາມເປັນຈິງຂອງປະເທດເຮົາ.

ໂອກາດດັ່ງກ່າວ, ທ່ານປະທານສະພາແຫ່ງຊາດ ໄດ້ສະເໜີໃຫ້ບັນດາທ່ານເອກອັກຄະລັດຖະທູດເອົາໃຈໃສ່ບາງບັນຫາດັ່ງນີ້: ຍຶດໝັ້ນແນວທາງການຕ່າງປະເທດ ຂອງພັກ, ລັດຖະທຳມະນູນ, ບັນດາກົດໝາຍ ແລະ ນະໂຍບາຍຕ່າງໆ ຂອງ ສປປລາວ; ປົກປ້ອງອຳນາດອະທິປະໄຕ, ຄວາມໝັ້ນຄົງ, ກຽດສັກສີ ແລະ ຜົນປະໂຫຍດຂອງຊາດ ຕະຫລອດຮອດສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງລາວ ແລະ ນິຕິບຸກຄົນຂອງ ສປປລາວ ຢູ່ຕ່າງປະເທດ; ເສີມຂະຫຍາຍສາຍພົວພັນມິດຕະພາບທີ່ດີລະຫວ່າງ ສປປລາວ ກັບຕ່າງປະເທດ ທັງທາງດ້ານການເມືອງ, ວັດທະນະ

ອ່ານຕໍ່ໜ້າ 2

## ທາບທາມຄຳຄິດເຫັນໃສ່ຮ່າງກົດໝາຍ ຈຳນວນ 12 ສະບັບ




(ສພຊ) ໃນລະຫວ່າງວັນທີ 3-7 ຕຸລາ 2022 ທີ່ສະພາແຫ່ງຊາດ, ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມທາບທາມຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 12 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX, ໂດຍການເປັນປະທານຂອງທ່ານ ສຈ. ປອ ຈະເລີນ ເຢຍປາວເຮີ ຮອງປະທານສະພາແຫ່ງຊາດ ທັງເປັນປະທານກຳມາທິການກົດໝາຍ; ເຂົ້າຮ່ວມມີບັນດາ

ອ່ານຕໍ່ໜ້າ 2

## ສ້າງຄວາມເຂັ້ມແຂງໃຫ້ກົງຈັກເສນາທິການ ຂອງ ກວສຊ



ໜ້າ 3

## ສພຊ ໄດ້ຮັບເຄື່ອງຊ່ວຍເຫລືອອຸປະກອນຮັບໃຊ້ຫ້ອງປະຊຸມ




ໜ້າ 2

## ທົດລອງນຳໃຊ້ຄູ່ມືການຕິດຕາມກວດກາ ການຈັດຕັ້ງປະຕິບັດກົດໝາຍ

(ສພຊ) ໃນລະຫວ່າງວັນທີ 29 ກັນຍາ-1 ຕຸລາ 2022 ທີ່ເມືອງວຽງຄຳ, ແຂວງວຽງຈັນ ກຳມາທິການກົດໝາຍ ໄດ້ຈັດກອງປະຊຸມທົດລອງການນຳໃຊ້ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໂດຍການເປັນປະທານຂອງທ່ານ ອຳໄພ ຈິດມານົນ ຮອງປະທານ

ອ່ານຕໍ່ໜ້າ 3




## ຮອງປະທານ ກບຜ ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ແຂວງອັດຕະປື

(ສພຊ) ໂດຍປະຕິບັດຕາມກົດໝາຍວ່າດ້ວຍການຕິດຕາມກວດກາ ຂອງສະພາແຫ່ງຊາດ ແລະ ແຜນການເຄື່ອນໄຫວປະຈຳປີ; ກຳມາທິການບັນດາເຜົ່າ (ກບຜ) ໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນການຈັດຕັ້ງປະຕິບັດກົດໝາຍ, ນິຕິກຳໃຕ້ກົດໝາຍ ຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ ວຽກງານສາສະໜາ, ຊົນເຜົ່າ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ, ການປົກຄອງທ້ອງຖິ່ນ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່, ການສ້າງບ້ານພັດທະນາຕິດພັນກັບວຽກງານ 3 ສ້າງ, ໂຄງການລົງທຶນ ແລະ ການພັດທະນາທີ່ມີຜົນກະທົບຕໍ່

ອ່ານຕໍ່ໜ້າ 3

## ກວທສ ຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຢູ່ສະຖາບັນພັດທະນາສີມືແຮງງານ



(ສພຊ) ເພື່ອເປັນການສືບຕໍ່ປະຕິບັດແຜນການເຄື່ອນໄຫວຕິດຕາມກວດກາການສ້າງວິຊາຊີບ, ການພັດທະນາສີມືແຮງງານ ແລະ ການສ້າງວຽກເຮັດງານທຳຂອງປະຊາຊົນ ເພື່ອແກ້ໄຂບັນຫາການວ່າງງານ ແລະ ເພື່ອ

ອ່ານຕໍ່ໜ້າ 3



ໜ້າ 4



ໜ້າ 4



ໜ້າ 4



ໜ້າ 5



ໜ້າ 5



ໜ້າ 5

**ຊົມເຊີຍວັນຄູແຫ່ງຊາດ ຄົບຮອບ 28 ປີ (7 ຕຸລາ 1994-7 ຕຸລາ 2022) ຢ່າງສຸດໃຈ!**

## ປະທານ...

ທຳ-ສັງຄົມ ແລະ ເສດຖະກິດ, ຕ້ອງຖືສຳຄັນການເຄື່ອນໄຫວການທູດ, ດ້ານການເມືອງ ຕ້ອງໄປຄຽງຄູ່ກັບການທູດທາງດ້ານເສດຖະກິດ, ການທູດປ້ອງກັນເທດ, ເພື່ອເພີ່ມມິດ ຫລຸດຜ່ອນສັດຕູ; ຕິດຕາມ ແລະ ລາຍງານສະພາບການທີ່ພົ້ນເດັ່ນຂອງລັດຖະສະພາບັນດາປະເທດທີ່ຕົນຮັບຜິດຊອບ, ສະພາບການພາກພື້ນ ແລະ ສາກົນ ແລະ ອື່ນໆ ທີ່ກ່ຽວຂ້ອງ ລວມທັງການຄົ້ນຄວ້າໃຫ້ທັດສະນະທີ່ເໝາະສົມ, ຖືກຕ້ອງ ແລະ ສອດຄ່ອງໃນສະພາບແຕ່ລະໄລຍະ; ເອົາໃຈໃສ່ຊຸກຍູ້ ແລະສະໜັບສະໜູນການພົວພັນຮ່ວມມື ລະຫວ່າງສະພາແຫ່ງຊາດລາວ ກັບລັດຖະສະພາຕ່າງປະເທດ ໃຫ້ມີການຂະຫຍາຍຕົວຂຶ້ນກວ່າເກົ່າ ເປັນຕົ້ນການແລກປ່ຽນຂອງຄະນະຜູ້ແທນ, ການຮ່ວມມືທາງດ້ານວິຊາການ, ຈັດກອງປະຊຸມສຳມະນາແລກປ່ຽນບົດຮຽນ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນ ເພື່ອຍົກສູງຂີດຄວາມສາມາດໃຫ້ແກ່ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ຂອງ ສປປລາວ; ນອກຈາກນີ້, ສະເໜີໃຫ້ມີການສະໜັບສະໜູນການພົວພັນຮ່ວມມືນຳກັນ ໃນເວທີລັດຖະສະພາພາກພື້ນ ແລະ ສາກົນ ຕາມຄວາມເໝາະສົມ. ພິເສດ ແມ່ນການຍາດແຍ່ງເອົາການສະໜັບສະໜູນ ແລະ ການຊ່ວຍເຫລືອຂອງຕ່າງປະເທດເຂົ້າໃນການສ້າງສາ ແລະ ພັດທະນາປະເທດຊາດ ຂອງພວກເຮົາ.



ພ້ອມນັ້ນ, ທ່ານ ປອ. ໄຊສົມພອນ ພົມວິຫານ ຍັງໄດ້ແຈ້ງໃຫ້ຮູ້ຕື່ມວ່າ: ສະພາແຫ່ງຊາດລາວ ໄດ້ມີການແຕ່ງຕັ້ງຄະນະມິດຕະພາບລັດຖະສະພາລາວ ກັບຕ່າງປະເທດ ຈຳນວນ 22 ຄະນະ, ມີການເຊັນ MOU ກັບ 8 ລັດຖະສະພາຂອງຕ່າງປະເທດ ໂດຍສະເພາະບັນດາລັດຖະສະພາຂອງປະເທດສັງຄົມນິຍົມ ແລະ ບັນດາລັດຖະສະພາຕາມຂົງເຂດ, ສຳລັບຢູ່ຂົງເຂດເອີຣົບ ແມ່ນມີຄະນະມິດຕະພາບລັດຖະສະພາລາວ-ເອີຣົບ; ສະນັ້ນ, ສະເໜີໃຫ້ບັນດາທ່ານທູດ ຈຶ່ງຊ່ວຍເກັບກຳສະພາບການຂອງບັນດາລັດຖະສະພາ, ຊຸກຍູ້ສົ່ງເສີມ ແລະ ຍາດແຍ່ງເອົາການຮ່ວມມື, ການສະໜັບສະໜູນຂອງບັນດາລັດຖະສະພາດັ່ງກ່າວ; ສະພາແຫ່ງຊາດລາວ ຍັງໄດ້ເປັນສະມາຊິກຂອງອົງການລັດຖະສະພາພາກພື້ນ ແລະ ສາກົນ ເປັນຕົ້ນ ອົງການສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ (AIPA), ສະຫະພັນລັດຖະສະພາສາກົນ IPU, ອົງການສະມັດຊາລັດຖະສະພາທີ່ໃຊ້ພາສາຝຣັ່ງ APF, ເວທີປຶກສາຫາລືລັດຖະສະພາອາຊີ-ເອີຣົບ ASEP, ເວທີປຶກສາຫາລືລັດຖະສະພາອາຊີ-ປາຊີຟິກ APPF, ກອງປະຊຸມສະພາແຫ່ງຊາດຂອງກຳປູເຈຍ, ລາວ ແລະ ຫວຽດນາມ (CLV) ແລະ ອື່ນໆ ພ້ອມທັງໃຫ້ບັນດາທ່ານຊ່ວຍຕິດຕາມ ແລະ ໃຫ້ການຮ່ວມມືນຳສະພາແຫ່ງຊາດ ພົວພັນນຳອົງການດັ່ງກ່າວຢ່າງມີປະສິດທິຜົນ; ສະເໜີໃຫ້ບັນດາທ່ານທູດ ຈຶ່ງຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍສຳນັກງານຜູ້ຕາງໜ້າແຫ່ງ ສປປລາວ ປະຈຳຢູ່ຕ່າງປະເທດ ແລະ ປະຕິບັດສິດ, ໜ້າທີ່ ແລະ ພາລະບົດບາດຂອງຕົນຢ່າງຕັ້ງໜ້າ; ສະເໜີໃຫ້ບັນດາທ່ານເອກອັກຄະລັດຖະທູດຊ່ວຍຊຸກຍູ້ ແລະ ສະໜັບສະໜູນ ສະພາແຫ່ງຊາດລາວ ເປັນເຈົ້າພາບໃນການຈັດກອງປະຊຸມສະພາແຫ່ງຊາດ 3 ປະເທດ: ກຳປູເຈຍ, ລາວ ແລະ ຫວຽດນາມ (CLV) ຄັ້ງທີ 1 ທີ່ໄດ້ຍົກລະດັບຈາກກອງປະຊຸມ 3 ກຳມາທິການຕ່າງປະເທດ ມາເປັນລະດັບປະທານສະພາແຫ່ງຊາດ ເຊິ່ງປັດຈຸບັນກຳລັງກະກຽມລະບຽບການຕ່າງໆກ່ຽວກັບການຈັດກອງປະຊຸມດັ່ງກ່າວຢູ່ ແລະ ຄາດຄະເນກາງປີ 2023 ສາມປະທານສະພາແຫ່ງຊາດ ຈະຈັດກອງປະຊຸມ CLV ໃນລະດັບປະທານສະພາ ຄັ້ງທີ 1 ຢູ່ ສປປລາວ ເປັນເຈົ້າພາບ ແລະ ໃນປີ 2024 ສະພາແຫ່ງຊາດລາວ ຈະເປັນເຈົ້າພາບຈັດກອງປະຊຸມໃຫຍ່ສະມັດຊາລັດຖະສະພາລະຫວ່າງຊາດອາຊຽນ ຫລື AIPA ຄັ້ງທີ 45 ຢູ່ນະຄອນຫລວງວຽງຈັນ.

(ສົມນຶກ ແກ້ວໄຊຍະຈັກ)



## ທາບທາມ...

ຮອງປະທານກຳມາທິການ, ສະມາຊິກສະພາແຫ່ງຊາດ ທີ່ປະຈຳຢູ່ສູນກາງ ແລະ ສະມາຊິກສະພາປະຊາຊົນນະຄອນຫລວງວຽງຈັນ, ສະມາຊິກສະພາປະຊາຊົນແຂວງວຽງຈັນ ແລະ ໄຊຍະບູລີ, ຕາງໜ້າຈາກບັນດາກະຊວງທີ່ກ່ຽວຂ້ອງ ພ້ອມດ້ວຍຄະນະຮັບຜິດຊອບສ້າງ ແລະ ປັບປຸງກົດໝາຍ, ຄະນະກົມ, ຄະນະພະແນກ, ຕາງໜ້າຈາກພາກສ່ວນຕ່າງໆພາຍໃນສະພາແຫ່ງຊາດ ແລະ ພະນັກງານວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງພ້ອມພຽງ.

ທັງນີ້, ເພື່ອເຮັດໃຫ້ການສ້າງ ແລະ ປັບປຸງກົດໝາຍ ໃຫ້ເປັນເຄື່ອງມືອັນໜັກແໜ້ນໃຫ້ແກ່ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ, ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ, ຂອງລັດ ແລະ ລວມໝູ່, ຮັບປະກັນການປົກປັກຮັກສາລະບອບປະຊາທິປະໄຕປະຊາຊົນໄດ້ຢ່າງໝັ້ນຄົງ; ການສ້າງ ແລະ ປັບປຸງກົດໝາຍ ຕ້ອງໃຫ້ສອດຄ່ອງກັບແນວທາງການປ່ຽນແປງໃໝ່ຮອບດ້ານທີ່ມີຫລັກການຂອງພັກ, ສອດຄ່ອງກັບກົນໄກເສດຖະກິດຕະຫລາດຕາມທິດສັງຄົມນິຍົມ, ເຊື່ອມໂຍງກັບພາກພື້ນ ແລະ ສາກົນ ໃນແຕ່ລະໄລຍະ, ຮັບປະກັນຫລັກວິຊາການ, ລັກສະນະວິທະຍາສາດ, ລັກສະນະຊາດ, ເປັນລະບົບ, ຄົບຊຸດ, ຮັດກຸມ, ກົມກຽວ ແລະ ສາມາດຈັ້ດຕັ້ງປະຕິບັດໄດ້; ດັ່ງນັ້ນ, ເພື່ອໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ໃນນາມເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າ ໄດ້ພ້ອມກັນຄົ້ນຄວ້າ ແລະ ປະກອບຄຳຄິດຄຳເຫັນໃສ່ຮ່າງກົດໝາຍ ຈຳນວນ 12 ສະບັບ ຄື: ກົດໝາຍວ່າດ້ວຍໜັງສືຜ່ານແດນ (ສ້າງໃໝ່); ກົດໝາຍວ່າດ້ວຍທາງນ້ຳ (ສ້າງໃໝ່); ກົດໝາຍວ່າດ້ວຍຫໍພິພິທະພັນ (ສ້າງໃໝ່); ກົດໝາຍວ່າດ້ວຍທະນາຍຄວາມ (ສະບັບປັບປຸງ); ກົດໝາຍວ່າດ້ວຍທະບຽນສານ (ສະບັບປັບປຸງ); ກົດໝາຍວ່າດ້ວຍການກັນ ແລະ ຄວບຄຸມພະຍາດຕິດຕໍ່ (ສະບັບປັບປຸງ); ກົດໝາຍວ່າດ້ວຍວິສາຫະກິດ (ສະບັບປັບປຸງ); ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ (ສະບັບປັບປຸງ); ກົດໝາຍວ່າດ້ວຍທຸລະກຳທາງເອເລັກໂຕຣນິກ (ສະບັບປັບປຸງ); ກົດໝາຍວ່າດ້ວຍອົງການໄອຍະການທະຫານ (ສະບັບປັບປຸງ); ກົດໝາຍວ່າດ້ວຍການກວດກາລັດ (ສະບັບປັບປຸງ) ແລະ ກົດໝາຍວ່າດ້ວຍການກວດສອບແຫ່ງລັດ (ສະບັບປັບປຸງ) ທັງເພື່ອເປັນການລະດົມຄຳຄິດຄຳເຫັນຈາກບັນດາທ່ານສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ແນໃສ່ເຮັດໃຫ້ຮ່າງກົດໝາຍ ຈຳນວນ 12 ສະບັບ ມີເນື້ອໃນຄົບຖ້ວນ, ຈະແຈ້ງ, ຮັດກຸມ, ສອດຄ່ອງກັບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມໃນປັດຈຸບັນ ແລະ ສາມາດນຳເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດຊຸດທີ IX ໄດ້.

ໃນໂອກາດນີ້, ທ່ານ ສຈ. ປອ ຈະເລີນ ເຍຍປາວເຮີ ໄດ້ມີຄຳເຫັນໂອ້ລົມ ແລະ ຮຽກຮ້ອງໃຫ້ບັນດາທ່ານຜູ້ແທນກອງປະຊຸມ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບໃນການຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງຕັ້ງໜ້າ ໂດຍສອດ ຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມໃນປັດຈຸບັນ ແລະ ຍາວນານ.

ກອງປະຊຸມໃນຄັ້ງນີ້, ໄດ້ຮັບການສະໜັບສະໜູນຈາກແຜນງານການມີສ່ວນຮ່ວມຂອງປະຊາຊົນຕໍ່ວຽກງານການປົກຄອງທີ່ດີ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ (ແຜນງານເຊກາ) ຮ່ວມກັບມູນນິທິເອເຊຍ.

(ອານຸສອນ ພູມມີທອນ)

## ສພຊ...

(ສພຊ) ວັນທີ 3 ຕຸລາ 2022 ທີ່ສະພາແຫ່ງຊາດ (ສພຊ), ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ (CSE) ຕາງໜ້າໂດຍທ່ານ ສີຫຸນ ສິດທິລືໄຊ ຮອງປະທານອາວຸໂສຊີ້ນຳວຽກງານຫ້ອງການ-ບໍລິຫານຂອງບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ ໄດ້ມອບເຄື່ອງອຸປະກອນຮັບໃຊ້ພາຍໃນຫ້ອງປະຊຸມໃຫ້ແກ່ສະພາແຫ່ງຊາດ ຕາງໜ້າຮັບໂດຍທ່ານ ນາງ ທັດສະດາພອນ ຈັນທະມາດ ຮອງປະທານກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ທັງເປັນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 16 ແຂວງເຊກອງ ເພື່ອນຳໄປມອບຕໍ່ໃຫ້ສະພາປະຊາຊົນແຂວງເຊກອງ ແລະ ອັດຕະປື ໂດຍການເຂົ້າຮ່ວມເປັນສັກຂີພິຍານຂອງພາກສ່ວນກ່ຽວຂ້ອງຂອງທັງສອງຝ່າຍ.

ໂອກາດດຽວກັນນີ້, ທ່ານ ນາງ ທັດສະດາພອນ ຈັນທະມາດ ໄດ້ສະແດງຄວາມຂອບໃຈເປັນຢ່າງສູງທີ່ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ ໄດ້ໃຫ້ການຊ່ວຍເຫລືອຕໍ່ສະພາແຫ່ງຊາດ; ເວົ້າລວມ, ເວົ້າສະເພາະແມ່ນການຊ່ວຍເຫລືອສະພາປະຊາຊົນແຂວງເຊກອງ ແລະ ອັດຕະປື ພ້ອມນັ້ນ, ທ່ານຍັງໄດ້ແຈ້ງໃຫ້ຊາບກ່ຽວກັບສະພາບຄວາມຫຍຸ້ງຍາກ ແລະ ຄວາມຈຳເປັນ ຂອງທັງ 2 ສະພາປະຊາຊົນແຂວງດັ່ງກ່າວ ທີ່ຍັງຂາດເຂີນດ້ານອຸປະກອນຮັບໃຊ້ໃນຫ້ອງປະຊຸມຫລາຍຢ່າງ.

ໃນຕອນທ້າຍ, ທ່ານ ນາງ ທັດສະດາພອນ ຈັນທະມາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ມອບໃບຍ້ອງຍໍໃຫ້ແກ່ບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ ໂດຍແມ່ນທ່ານ ສີຫຸນ ສິດທິລືໄຊ ເປັນຜູ້ຮັບ ເນື່ອງຈາກມີຜົນງານດີເດັ່ນໃນການປະກອບສ່ວນຊ່ວຍເຫລືອອຸປະກອນຮັບໃຊ້ພາຍໃນຫ້ອງປະຊຸມໃຫ້ແກ່ສະພາແຫ່ງຊາດໃນຄັ້ງນີ້. ພ້ອມດຽວກັນນີ້, ທ່ານ ສີຫຸນ ສິດທິລືໄຊ ຕາງໜ້າບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ ໄດ້ສະແດງຄວາມດີໃຈທີ່ໄດ້ປະກອບສ່ວນເຂົ້າໃນວຽກງານລວມຂອງສະພາແຫ່ງຊາດ ກໍຄືສະພາປະຊາຊົນທັງສອງແຂວງ ແລະສະແດງຄວາມຮູ້ບຸນຄຸນຢ່າງລົ້ນເຫລືອຕໍ່ການຊີ້ນຳຂອງທັງສອງແຂວງ ທີ່ໄດ້ສ້າງເງື່ອນໄຂອຳນວຍຄວາມສະດວກໃນດ້ານຕ່າງໆ ໃຫ້ແກ່ການຈັດຕັ້ງປະຕິບັດໂຄງການພະລັງງານໄຟຟ້າຂອງບໍລິສັດ ຈະເລີນເຊກອງ ພະລັງງານ ຈຳກັດ.

(ນາງ ປາກາລັກ ພົມມີໄຊ)

## ເລື່ອງເດັ່ນ, ຂ່າວເດັດ

**# ຄັດໂດຍ: ຫອມສະນິດ**

❑ *ໂຄງການເຂື່ອນໄຟຟ້ານ້ຳອູ ເປັນເຂື່ອນໄຟຟ້ານ້ຳຕົກແບບຂັ້ນໄດ ຕາມລຳນ້ຳອູ ຕັ້ງຢູ່ແຂວງຫລວງພະບາງ ແລະ ຜົ້ງສາລີ ເປັນແຫລ່ງຜະລິດໄຟຟ້າຫລັກ ຂອງພາກກາງ ແລະ ພາກເໜືອຂອງລາວ ເຊິ່ງປະກອບມີ 7 ເຂື່ອນແບບຂັ້ນໄດ ມີກຳລັງຕິດຕັ້ງໄຟຟ້າລວມທັງໝົດ 1.272 ເມກາວັດ ເຊິ່ງເຂື່ອນທັງໝົດໄດ້ສຳເລັດການກໍ່ສ້າງ ແລະ ເປີດການຜະລິດໃນທ້າຍປີ 2021 ອັນໄດ້ກາຍເປັນປະຕູສຳຄັນໃນການຮ່ວມມືຂອງໂຄງການພະລັງງານຂະໜາດໃຫຍ່ ແລະ ເຕັກໂນໂລຊີພະລັງງານໄຟຟ້ານ້ຳຕົກໃນພາກເໜືອ ຂອງ ສປປລາວ ກວມລວມເຂື່ອນໄຟຟ້ານ້ຳງື່ມ 5 ໄດ້ສ້າງຮູບແບບຄຸ້ມຄອງການຜະລິດ ແລະ ການດຳເນີນງານເຂື່ອນໄຟຟ້າແບບ "8 ເຂື່ອນ 1 ສູນບັນຊາ" ໃນລາວ.*

***ນສພ. ປະຊາຊົນ 04/10/2022***

❑ *ການຈັດບຸນອອກພັນສາປະວໍລະນາປີນີ້ ຄະນະກຳມະການຈັດງານຂອງເມືອງຈັນທະບູລີ ນະຄອນຫລວງວຽງຈັນ ໃຫ້ຮູ້ວ່າ: ນັບແຕ່ວັນທີ 8-11 ຕຸລາ 2022 ໄດ້ກຳນົດເອົາພື້ນທີ່ວາງສະແດງສິນຄ້າຜະລິດຕະພັນຕ່າງໆ ໃນຂອບເຂດສວນເຈົ້າອານຸວົງ ແລະ ເຂດພາຍນອກຈຳນວນໜຶ່ງຄາດວ່າຈະມີຫ້າງຮ້ານເຂົ້າຮ່ວມວາງສະແດງ 600 ກວ່າຮ້ານ ເພື່ອໃຫ້ປະຊາຊົນລາວບັນດາເຜົ່າທີ່ມາທ່ຽວງານບຸນໄດ້ຊື້-ຂາຍ ແລກປ່ຽນຜະລິດຕະພັນຕ່າງໆພາຍໃນງານ ແນໃສ່ເພື່ອຊຸກຍູ້ສົ່ງເສີມການທ່ອງທ່ຽວໂດຍສະເພາະການທ່ອງທ່ຽວຢູ່ເມືອງຈັນທະບູລີ ກໍຄືນະຄອນຫລວງວຽງຈັນ ໃຫ້ມີບັນຍາກາດຟົດຟື້ນ ທັງເປັນການສົ່ງເສີມການໂຄສະນາວາງສະແດງສິນຄ້າ ຜະລິດຕະພັນຂອງລາວໃຫ້ນັບມື້ເຕີບໃຫຍ່ຂະຫຍາຍຕົວຫລາຍຂຶ້ນ.*

***ນສພ. ວຽງຈັນໃໝ່ 05/10/2022***

❑ *ບຸນມະໂຫລານສົ່ງເສີມການອ່ານ ຄັ້ງທີ 3 Book-fesfival 2022 ເຊິ່ງຈະໄດ້ຈັດຂຶ້ນໃນວັນທີ 9-13 ພະຈິກ 2022 ຢູ່ທີ່ສູນການຄ້າສາກົນ WTC ນະຄອນຫລວງວຽງຈັນ ໃນຫົວຂໍ້ "ຮັກພາສາລາວ" ເປັນການສືບເນື່ອງມາຈາກຜົນສຳເລັດຂອງການຈັດງານບຸນມະໂຫລານສົ່ງເສີມການອ່ານປີ 2019 ທີ່ສູນການຄ້າສາກົນ WTC ພາຍໃຕ້ຄຳຂວັນ "ສ້າງການອ່ານໃຫ້ເປັນວັດທະນະທຳນຳຄວາມຮູ້ຄວາມກ້າວໜ້າຢ່າງຍືນຍົງ" ເຊິ່ງມີຜູ້ເຂົ້າຮ່ວມງານຫລາຍກວ່າ 65 ພັນຄົນ ດ້ວຍກິດຈະກຳຫລາຍກວ່າ 10 ລາຍການ ແລະ ຄັ້ງທີ 2 ຈັດຂຶ້ນທີ່ສູນການຄ້າວຽງຈັນເຊັນເຕີ ເຊິ່ງເປັນການສ້າງປະສົບການໃໝ່ໃຫ້ແກ່ນັກຮຽນ-ນັກສຶກສາ ທີ່ມີຄວາມສົນໃຈໃນການອ່ານ ເຊິ່ງການຈັດງານຄັ້ງນີ້ເປັນການສານຕໍ່ງານບຸນມະໂຫລານສົ່ງເສີມການອ່ານໃຫ້ມີຂຶ້ນຢ່າງຕໍ່ເນື່ອງທຸກໆປີ ເພື່ອເປັນການສົ່ງເສີມໃຫ້ຄົນລາວ ເລັງເຫັນເຖິງຄວາມສຳຄັນຂອງການອ່ານ, ສົ່ງເສີມໃຫ້ອ່ານໜັງສືຢ່າງຕໍ່ເນື່ອງ ແລະ ເປັນການສົ່ງເສີມໃຫ້ເຍົາວະຊົນ-ຊາວໜຸ່ມ ມີຄວາມມັກຮັກໃນການອ່ານ.*

***ນສພ. ວຽງຈັນໃໝ່ 05/10/2022***



## ທົດລອງ...

ກຳມາທິການກົດໝາຍ; ມີບັນດາທ່ານຮອງຫົວໜ້າກົມ, ຫົວໜ້າພະແນກ, ຮອງຫົວໜ້າພະແນກ ແລະ ພະນັກງານວິຊາການຈຳນວນໜຶ່ງ ຂອງສະພາແຫ່ງຊາດເຂົ້າຮ່ວມ.

ກອງປະຊຸມ, ໄດ້ຮັບຟັງການເຜີຍແຜ່ມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ສະບັບເລກທີ 53/ຄປຈ, ລົງວັນທີ 23 ສິງຫາ 2022; ຮັບຟັງການສະເໜີຮ່າງຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ໄດ້ແບ່ງກຸ່ມເພື່ອຄົ້ນຄວ້າເຮັດທົດລອງການນຳໃຊ້ຄູ່ມືການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ໂດຍລົງເລິກກ່ຽວກັບການສ້າງຮ່າງແຜນການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ, ຮ່າງຄຳຖາມເຈາະຈີ້ມ, ຮ່າງບົດລາຍງານຜົນຂອງການຕິດຕາມກວດກາການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ແລະ ຮ່າງມະຕິຮັບຮອງຂອງກອງປະຊຸມສະພາແຫ່ງຊາດ ເຊິ່ງພາຍຫລັງແຕ່ລະກຸ່ມໄດ້ຄົ້ນຄວ້າ ແລະ ກະກຽມສຳເລັດແລ້ວ ກໍໄດ້ນຳມາສະເໜີຕໍ່ກອງປະຊຸມແລກປ່ຽນບົດຮຽນນຳກັນ ເພື່ອເຮັດໃຫ້ຄູ່ມືດັ່ງກ່າວມີເນື້ອໃນສົມບູນ, ເຂົ້າໃຈງ່າຍ, ມີຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ແລະ ສາມາດຈັດຕັ້ງປະຕິບັດວຽກງານຕົວຈິງ ຢ່າງມີປະສິດທິພາບ, ປະສິດທິຜົນ.

ກອງປະຊຸມຄັ້ງນີ້, ໄດ້ຮັບການສະໜັບສະໜູນທາງດ້ານງົບປະມານຈາກໂຄງການ WFD (Westminster Foundation for Democracy).

(ກົມຕິດຕາມກວດກາ, ໂຄສະນາ ແລະ ຕີຄວາມໝາຍກົດໝາຍ)

## ຮອງປະທານ...

ປະຊາຊົນບັນດາເຜົ່າ; ໃນວັນທີ 28 ກັນຍາຜ່ານມາ, ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ອັດຕະປື, ໂດຍການເປັນປະທານຂອງທ່ານ ແກ້ວ ຈະເລີນ ເຊ່ຍຢັ້ງຢ່າງ ຮອງປະທານກຳມາທິການບັນດາເຜົ່າ ສະພາແຫ່ງຊາດ ຮ່ວມກັບທ່ານ ນາງ ພອນມະນີ ຂຽນໄຊຍະວົງ ຮອງປະທານສະພາປະຊາຊົນແຂວງ ທັງເປັນຜູ້ຊີ້ນຳວຽກງານວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ມີທ່ານ ແຫວນຄຳ ປະທຸມມະແສງ ປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ, ຕາງໜ້າຈາກອົງການແນວລາວສ້າງຊາດແຂວງ, ພະແນກພາຍໃນ, ພະແນກກະສິກຳ ແລະ ປ່າໄມ້, ສະຫະພັນແມ່ຍິງ, ສະຫະພັນກຳມະບານ, ກອງບັນຊາການ ປກສ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ກອງປະຊຸມ ໄດ້ຮັບຟັງການລາຍງານຕາມຄຳຖາມເຈາະຈີ້ມຂອງປະທານກອງປະຊຸມ ເປັນຕົ້ນກ່ຽວກັບການແກ້ໄຂປາກົດການຫຍໍ້ທໍ້ທາງສາສະໜາ ແລະ ບັນດາເຜົ່າ ຢູ່ພາຍໃນແຂວງ; ການຈັດຕັ້ງປະຕິບັດດຳລັດວ່າດ້ວຍການຄຸ້ມຄອງ ແລະ ການປົກປ້ອງການເຄື່ອນໄຫວຂອງສາສະໜາ ສະບັບເລກທີ 315/ລບ, ລົງວັນທີ 16/8/2016, ວຽກງານການປົກຄອງທ້ອງຖິ່ນ ແລະ ວຽກງານ 3 ສ້າງ ແລະ ວຽກງານພັດທະນາຊົນນະບົດແກ້ໄຂຄວາມທຸກຍາກ, ການຈັດສັນພູມລຳເນົາ ແລະ ອາຊີບຄົງທີ່; ການສ້າງບ້ານພັດທະນາ ຕິດພັນກັບຜົນກະທົບຈາກໂຄງການພັດທະນາ ແລະ ການແກ້ໄຂບັນຫາຂອງປະຊາຊົນບັນດາເຜົ່າທີ່ຖືກຜົນກະທົບຈາກໂຄງການພັດທະນາຕ່າງໆ; ພ້ອມດຽວກັນນັ້ນ, ກໍໄດ້ແລກປ່ຽນປະກອບຄຳຄິດຄຳເຫັນຕໍ່ກັບວຽກງານບັນດາເຜົ່າພາຍໃນແຂວງຢ່າງມີຈຸດສຸມ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານບັນດາເຜົ່າພາຍໃນແຂວງ ຖືກຕ້ອງຕາມແນວທາງຂອງພັກ ແລະ ລະບຽບກົດໝາຍຂອງລັດ.

ໂອກາດດັ່ງກ່າວ, ທ່ານ ແກ້ວ ຈະເລີນ ເຊ່ຍຢັ້ງຢ່າງ ຍັງໄດ້ມີຄຳເຫັນໂອ້ລົມເຊິ່ງທ່ານໄດ້ສະແດງຄວາມຍ້ອງຍໍຊົມເຊີຍຕໍ່ຜົນງານອັນພົ້ນເດັ່ນຫລາຍດ້ານຂອງພາກສ່ວນທີ່ກ່ຽວຂ້ອງທີ່ຍາດມາໄດ້ ແລະ ເນັ້ນໃຫ້ສືບຕໍ່ເອົາໃຈໃສ່ຟື້ນຟູວັດທະນະທຳ, ສົ່ງເສີມການສຶກສາ ແລະ ແກ້ໄຂບັນຫາຮີດຄອງປະເພນີທີ່ບໍ່ຖືກຕ້ອງສອດຄ່ອງ, ເອົາໃຈໃສ່ທ່າແຮງທີ່ເປັນມູນເຊື້ອ ເປັນຕົ້ນການສົ່ງເສີມດ້ານກະສິກຳ ກໍຄືການປູກຝັງ-ລ້ຽງສັດ ໃຫ້ປະຊາຊົນບັນດາເຜົ່າ, ຍົກສູງການຕິດຕາມກວດກາກ່ຽວກັບວຽກງານເຜົ່າ ແລະ ສາສະໜາ ຢູ່ພາຍໃນແຂວງ ແລະ ລົງໃກ້ຊິດຕິດແທດກັບປະຊາຊົນບັນດາເຜົ່າໃຫ້ຫລາຍຂຶ້ນກວ່າເກົ່າ ນຳເອົາແນວທາງຂອງພັກ, ລະບຽບກົດໝາຍຂອງລັດ ລົງໃຫ້ປະຊາຊົນຮັບຮູ້ເຊື່ອມຊຶມ ແລະ ເຂົ້າໃຈ.

(ວິນັດ)






## ກວທສ...

ເປັນການເກັບກຳຂໍ້ມູນຈາກບັນດາກະຊວງຕ່າງໆຢູ່ໃນຂົງເຂດວັດທະນະທຳ-ສັງຄົມ; ວັນທີ 30 ກັນຍາຜ່ານມາ, ທ່ານ ດຣ. ບຸນລ້ອມ ແກ້ວບົວໂຮມ ຮອງປະທານກຳມາທິການວັດທະນະທຳ-ສັງຄົມ (ກວທສ) ສະພາແຫ່ງຊາດ ພ້ອມດ້ວຍຄະນະ ໄດ້ເຄື່ອນໄຫວຕິດຕາມກວດກາ-ເກັບກຳຂໍ້ມູນຢູ່ສະຖາບັນພັດທະນາສີມືແຮງງານ ໂດຍການຕອນຮັບຂອງທ່ານ ບຸນມາ ສິດທິໂສມ ຫົວໜ້າສະຖາບັນພັດທະນາສີມືແຮງງານ, ກະຊວງແຮງງານ ແລະ ສະຫວັດດີການສັງຄົມ.

ໃນໂອກາດນີ້, ຄະນະ ໄດ້ຮັບຟັງການລາຍງານໂດຍຫຍໍ້ກ່ຽວກັບສະພາບການເຄື່ອນໄຫວວຽກງານຂອງສະຖາບັນພັດທະນາສີມືແຮງງານ ແລະ ສະພາບພົ້ນເດັ່ນ, ຂໍ້ຫຍຸ້ງຍາກ ພ້ອມທັງຮັບຟັງຂໍ້ສະເໜີຕ່າງໆ ຈາກຄູ-ອາຈານທີ່ສິດສອນຢູ່ໃນສະຖາບັນ; ຈາກນັ້ນ, ຄະນະ ກໍໄດ້ຕັ້ງຄຳຖາມເຈາະຈີ້ມຕໍ່ບັນຫາຕ່າງໆທີ່ຕົນເອງໃຫ້ຄວາມສົນໃຈ ແລະ ແນວທາງແກ້ໄຂບັນຫາໃນຕໍ່ໜ້າ ເພື່ອເປັນຂໍ້ມູນໃຫ້ແກ່ກຳມາທິການ.

ພ້ອມດຽວກັນນັ້ນ, ຄະນະຍັງໄດ້ສືບຕໍ່ຢ້ຽມຢາມ ແລະ ເກັບກຳຂໍ້ມູນ ຢູ່ບໍລິສັດ ທຣີໂອ, ກະຊວງແຮງງານ ແລະ ສະວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ, ກະຊວງອຸດສາຫະກຳ ແລະ ການຄ້າ, ນິຄົມອຸດສາຫະກຳ ແລະ ການຄ້າວຽງຈັນໂນນທອງ ແລະ ກະຊວງກະສິກຳ ແລະ ປ່າໄມ້ ເຊິ່ງຈະໄດ້ເຄື່ອນໄຫວຕິດຕາມກວດກາ ແລະ ເກັບກຳຂໍ້ມູນ ຈົນຮອດວັນທີ 5 ຕຸລາ 2022 ຈຶ່ງຈະສຳເລັດ.

(ສອນສັກ ວັນວິໄຊ)

## ສ້າງຄວາມເຂັ້ມແຂງ...

(ສພຊ) ໃນລະຫວ່າງວັນທີ 7-8 ຕຸລາ 2022 ທີ່ເມືອງເຟືອງ ແຂວງວຽງຈັນ, ກຳມາທິການວຽກງານສະມາຊິກສະພາແຫ່ງຊາດ (ກວສຊ) ໄດ້ຈັດກອງປະຊຸມເຝິກອົບຮົມສ້າງຄວາມເຂັ້ມແຂງໃຫ້ແກ່ກົງຈັກເສນາທິການຂອງກວສຊ ແລະ ກົງຈັກເສນາທິການຂອງສະພາປະຊາຊົນຂັ້ນແຂວງ ໂດຍການເປັນປະທານຂອງທ່ານ ສຸບັນ ສະວະບຸດ ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ເຂົ້າຮ່ວມມີຮອງປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ, ຮອງເລຂາທິການສະພາແຫ່ງຊາດ, ຮອງປະທານສະພາປະຊາຊົນຂັ້ນແຂວງ ທີ່ມາຈາກ 3 ແຂວງຄື: ຊຽງຂວາງ, ວຽງຈັນ, ບໍລິຄຳໄຊ; ຄະນະກົມ, ຄະນະພະແນກ, ພະນັກງານ-ວິຊາການທີ່ກ່ຽວຂ້ອງ ພ້ອມດ້ວຍແຂກຖືກເຊີນ.

ທັງນີ້, ເພື່ອເປັນການຍົກສູງພາລະບົດບາດ, ສິດ ແລະ ໜ້າທີ່ ຂອງກົມເສນາທິການຂອງ ກວສຊ ໃຫ້ມີຄວາມໜັກແໜ້ນເຂັ້ມແຂງ ແລະ ມີປະສິດທິພາບສູງຂຶ້ນ ທັງເປັນການເພີ່ມທະວີການປະສານງານຂອງກົມເສນາທິການ ຂອງ ກວສຊ ກັບກົງຈັກເສນາທິການສະພາປະຊາຊົນຂັ້ນແຂວງໃຫ້ມີປະສິດທິພາບ ເພື່ອຮັບປະກັນການປະຕິບັດສິດ ແລະ ໜ້າທີ່ ຕາມພາລະບົດບາດຂອງຕົນ.

ໃນພິທີ, ທ່ານ ສຸບັນ ສະວະບຸດ ໄດ້ມີຄວາມເຫັນກ່າວເປີດກອງປະຊຸມວ່າ: ກອງປະຊຸມເຝິກອົບຮົມຄັ້ງນີ້ ມີຄວາມໝາຍສຳຄັນຫລາຍ ເຊິ່ງຜູ້ເຂົ້າຮ່ວມຈະໄດ້ຮັບຮູ້ເຂົ້າໃຈເນື້ອໃນຈິດໃຈກ່ຽວກັບມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ຄະນະປະຈຳສະພາແຫ່ງຊາດ; ມະຕິຂອງຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ຂໍ້ຕົກລົງຂອງເລຂາທິການສະພາແຫ່ງຊາດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ ແລະ ກົມພັດທະນາວຽກງານສະພາ ເພື່ອຕອບສະໜອງກັບຄວາມຮຽກຮ້ອງຕ້ອງການ ຂອງໜ້າທີ່ວຽກງານໃນໄລຍະໃໝ່; ຄືດັ່ງບັນດາທ່ານຮູ້ແລ້ວວ່າຊຸດເຝິກອົບຮົມເທື່ອນີ້ເປັນການເຝິກສະເພາະໃຫ້ຜູ້ທີ່ເປັນເສນາທິການທີ່ປະຕິບັດວຽກງານປະຈຳເຂດເລືອກຕັ້ງ, ພະນັກງານ-ລັດຖະກອນ ທັງສອງກົມຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ແລະ ໜ່ວຍງານຊ່ວຍວຽກສະມາຊິກສະພາປະຊາຊົນຂັ້ນແຂວງ ໃນ 3 ແຂວງ; ດັ່ງນັ້ນ, ເພື່ອເຮັດໃຫ້ຊຸດເຝິກອົບຮົມຄັ້ງນີ້ບັນລຸຕາມຈຸດປະສົງຄາດໝາຍທີ່ວາງໄວ້ ຮຽກຮ້ອງມາຍັງບັນດາທ່ານທີ່ເຂົ້າຮ່ວມເຝິກອົບຮົມຄັ້ງນີ້ ຈົ່ງພ້ອມກັນຍົກສູງຄວາມຮັບຜິດຊອບຂອງຕົນ ເຂົ້າໃນການສຶກສາອົບຮົມ ແລະ ເພື່ອນຳ ມາແລກປ່ຽນບົດຮຽນປະສົບການຮ່ວມກັນ ເຖິງວ່າກອງປະຊຸມເຝິກອົບຮົມຂອງພວກເຮົາໃນຄັ້ງນີ້ ໃຊ້ເວລາພຽງແຕ່ 2 ວັນ ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການແມ່ນເວລາສັ້ນ ແຕ່ເຊື່ອໝັ້ນວ່າບັນດາທ່ານຈະສຸມສະຕິປັນຍາສຶກສາຄົ້ນຄວ້າເອົາບົດຮຽນໃນເທື່ອນີ້ ໄປໝູນໃຊ້ເຂົ້າໃນວຽກງານຕົວຈິງຂອງບັນດາທ່ານໃຫ້ໄດ້ຮັບຜົນດີ.

ກອງປະຊຸມ ໄດ້ຮັບຟັງຂໍ້ສະເໜີ ຈຳນວນ 4 ຫົວຂໍ້ ຄື: ຄວາມຮູ້ພາລະບົດບາດຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ; ພາລະບົດບາດ ຂອງກຳມາທິການວຽກງານສະມາຊິກສະພາແຫ່ງຊາດ; ພາລະບົດບາດການເປັນເສນາທິການ ຂອງກົມຄຸ້ມຄອງສະມາຊິກສະພາແຫ່ງຊາດ; ພາລະບົດບາດການເປັນເສນາທິການຂອງກົມພັດທະນາວຽກງານສະພາ; ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມກໍໄດ້ປະກອບຄວາມຄິດເຫັນຕໍ່ກັນໃນກອງປະຊຸມ ເພື່ອເຮັດໃຫ້ມີເນື້ອໃນຄົບຖ້ວນສົມບູນ ແລະ ສາມາດນຳໄປໝູນໃຊ້ເຂົ້າໃນວຽກງານຕົວຈິງ.

ກອງປະຊຸມໃນຄັ້ງນີ້ ໄດ້ຮັບການສະໜັບສະໜູນຈາກອົງການເຮວີຕັດສ (Hevetaslaos) ແລະ ງົບປະມານສົມທົບຈາກຄະນະເລຂາທິການສະພາແຫ່ງຊາດ.

(ອານຸສອນ ພູມມີທອນ)






# ໄລຍະ 9 ເດືອນ ຄລສຂ ສາລະວັນ ມີຜົນງານສຳເລັດຫລາຍດ້ານ



(ສພຊ) ຕອນເຊົ້າຂອງວັນທີ 27 ກັນຍາ 2022 ຢູ່ທີ່ຫ້ອງປະຊຸມສະພາປະຊາຊົນແຂວງ (ສພຂ) ສາລະວັນ, ຄະນະເລຂາທິການສະພາປະຊາຊົນແຂວງ (ຄລສຂ) ສາລະວັນ ໄດ້ເປີດກອງປະຊຸມສະຫລຸບການເຄື່ອນໄຫວວຽກງານຮອບດ້ານໄລຍະ 9 ເດືອນ ແລະ ທິດທາງແຜນການສືບຕໍ່ 3 ເດືອນທ້າຍປີ 2022 ຂອງຕົນຂຶ້ນຢ່າງເປັນທາງການ ໂດຍການເປັນປະທານກອງປະຊຸມຂອງທ່ານ ສົມພອນ ແສງສຸລິຈັນ ເລຂາທິການ ສພຂ; ເຂົ້າຮ່ວມມີບັນດາທ່ານຮອງເລຂາທິການ ສພຂ, ຕາງໜ້າຈາກຄະນະກຳມະການພ້ອມດ້ວຍພະນັກງານ-ລັດຖະກອນພາຍໃນ ສພຂ ເຂົ້າຮ່ວມ.

ໃນທີ່ປະຊຸມ, ທ່ານຈັນທະຄາດ ສີສຸພັນ ຮອງເລຂາທິການ ສພຂ ໄດ້ຜ່ານຮ່າງບົດສະຫລຸບການເຄື່ອນໄຫວວຽກງານຮອບດ້ານໄລຍະ 9 ເດືອນ ແລະ ທິດທາງແຜນການສືບຕໍ່ 3 ເດືອນທ້າຍປີ 2022 ຂອງ ຄລສຂ ສາລະວັນ ໂດຍລວມໃນນັ້ນ, ແມ່ນດ້ານການຈັດຕັ້ງປະຕິບັດຕາມພາລະບົດບາດ, ສິດ ແລະ ໜ້າທີ່ ໃນການເປັນເສນາທິການໃຫ້ແກ່ ສພຂ, ຄະນະປະຈຳ ສພຂ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 14 ໃນການຄົ້ນຄວ້າ-ສັງລວມເນື້ອໃນວຽກງານຮອບດ້ານ, ສ້າງສິ່ງອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວຕ່າງໆ, ຄຸ້ມຄອງວຽກງານບໍລິຫານ, ແຜນການ ແລະ ການເງິນ ແລະ ຄຸ້ມຄອງວຽກງານການຈັດຕັ້ງ-ພະນັກງານ ສພຂ ເປັນຕົ້ນແມ່ນອຳນວຍຄວາມສະດວກໃຫ້ຄະນະປະຈຳສະພາປະຊາຊົນແຂວງ ຈັດກອງປະຊຸມທາບທາມຮ່າງກົດໝາຍ ທີ່ ສພຊ ສົ່ງໃຫ້ 2 ຄັ້ງ, ຈຳນວນ 9 ສະບັບ ແລະ ເຂົ້າຮ່ວມທາບທາມຮ່າງກົດໝາຍທັງພາຍໃນ ແລະ ຕ່າງແຂວງຕາມການເຊີນ 8 ຄັ້ງ, ຈຳນວນ 9 ສະບັບ; ສັງລວມເນື້ອໃນຮັບຮອງເອົາບັນຫາສຳຄັນຂອງແຂວງ ໃນກອງປະຊຸມສະໄໝສາມັນ15 ສະ ແລະ ອອກມະຕິຂອງຄະນະປະຈຳ ສພຂ ໃນເວລາກອງປະຊຸມສະໄໝສາມັນ ສພຂ ບໍ່ໄດ້ເປີດ ຈຳນວນ 9 ສະບັບ ໄດ້ສັງລວມເນື້ອໃນນິຕິກຳໃຕ້ກົດໝາຍຮັບໃຊ້ການເຄື່ອນໄຫວວຽກງານຂອງສະພາປະຊາຊົນແຂວງ 4 ສະບັບ, ນິຕິກຳກ່ຽວກັບການຜັນຂະຫຍາຍວາລະແຫ່ງຊາດ 3 ສະບັບ; ແກ້ໄຂເນື້ອໃນໂທລະສັບສາຍດ່ວນກອງປະຊຸມສະໄໝສາມັນເທື່ອທີ 3 ທີ່ສະພາແຫ່ງຊາດ ສົ່ງເຖິງ ສພຂ ມີ 6 ສາຍ, 6 ຄຳສະເໜີຕໍ່ກັບຄຳສະເໜີໄດ້ອອກແຈ້ງການໃຫ້ພາກສ່ວນກ່ຽວຂ້ອງນຳໄປຄົ້ນຄວ້າແກ້ໄຂໄດ້ສຳເລັດ; ການເຄື່ອນໄຫວຊຸກຍູ້ຕິດຕາມກວດກາ ລວມ 13 ຄັ້ງ ເຊັ່ນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ຕິດພັນກັບສອງວາລະແຫ່ງຊາດ 8 ເມືອງທົ່ວແຂວງ; ອຳນວຍຄວາມສະດວກໃຫ້ແກ່ການຕິດຕາມກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຢູ່ດ່ານສາກົນລະໄລ, ຄ້າຍຄຸມຂັງ-ດັດສ້າງນາໄຊ; ຕິດຕາມກວດກາ-ເກັບກຳຂໍ້ມູນ ແລະ ລາຍງານໃຫ້ ສພຊ ກ່ຽວກັບສະພາບການຕ້ານສະກັດກັ້ນ, ຄວບຄຸມພະຍາດໂຄວິດ-19 ໃນທົ່ວແຂວງ ແລະ ຕິດຕາມ ສສຊ, ສສຂ ເຄື່ອນໄຫວເຜີຍແຜ່ມະຕິກອງປະຊຸມສະໄໝສາມັນຢູ່ບັນດາເມືອງທົ່ວແຂວງ ແລະ ວຽກງານປີ່ນອ້ອມອື່ນໆອີກ.

ຕອນທ້າຍ, ທ່ານ ສົມພອນ ແສງສຸລິຈັນ ໄດ້ໂອ້ລົມ ແລະ ເນັ້ນຕື່ມຕໍ່ວຽກງານສືບຕໍ່ໃນໄລຍະ 3 ເດືອນຕໍ່ໜ້າ ໃຫ້ສືບຕໍ່ເອົາໃຈໃສ່ນຳພາ-ຊີ້ນຳບັນດາຂະແໜງການ ຕິດພັນກັບການກຳນົດແຜນງານ ໃນແຕ່ລະໄລຍະໃນການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ; ສືບຕໍ່ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງພະນັກງານ-ສືບທອດປ່ຽນແທນເຄິ່ງສະໄໝ ພາຍໃນ ສພຂ ໃຫ້ແທດເໝາະກັບຄວາມເປັນຈິງຕິດພັນກັບການປະເມີນປະຈຳປີ; ສືບຕໍ່ຈັດຕັ້ງຜັນຂະຫຍາຍ ເນື້ອໃນຈິດໃຈຂອງບົດສະຫລຸບສະບັບນີ້ ເພື່ອເປັນບ່ອນອີງ ແລະ ພ້ອມກັນຈັດຕັ້ງປະຕິບັດໜ້າທີ່ການເມືອງຕາມການມອບໝາຍຢ່າງຕັ້ງໜ້າໃຫ້ສາມາດບັນລຸຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ວາງໄວ້ໃຫ້ມີຜົນສຳເລັດ.

(ດີລຳພົນ ພົມມະຈັນ)

# ຫາລືການສ້າງບົດບັນທຶກຊ່ວຍຈຳການຮ່ວມມືໄມຕີຈິດມິດຕະພາບຫລວງນ້ຳທາ-ຢູນນານ




(ສພຊ) ຕອນເຊົ້າວັນທີ 30 ສິງຫາ 2022 ສະພາປະຊາຊົນແຂວງ (ສພຂ) ຫລວງນ້ຳທາ ໄດ້ດຳເນີນກອງປະຊຸມປຶກສາຫາລື ກ່ຽວກັບການສ້າງບົດບັນທຶກຊ່ວຍຈຳການຮ່ວມມືໄມຕີຈິດມິດຕະພາບລະຫວ່າງ ສພຂ ຫລວງນ້ຳທາ ກັບຄະນະກຳມະການປະຈຳສະພາຜູ້ແທນປະຊາຊົນແຂວງຢູນນານ ແຫ່ງ ສປຈີນ ໂດຍເປັນປະທານຂອງທ່ານ ມີໄຊ ມີວິໄລ ກຳມະການຄະນະປະຈຳສະພາປະຊາຊົນແຂວງ, ເລຂາທິການ ສພຂ; ເຂົ້າຮ່ວມຂອງທ່ານ ເພັດມະໂນ ໄຊຍະທິຫົວໜ້າຂະແໜງພົວພັນຕ່າງປະເທດ, ມີຄະນະເລຂາທິການ, ຫົວໜ້າຂະແໜງ ພ້ອມດ້ວຍວິຊາການທີ່ກ່ຽວຂ້ອງເຂົ້າຮ່ວມ.

ອີງໃສ່ແນວທາງນະໂຍບາຍການຕ່າງປະເທດຂອງສອງພັກ-ສອງລັດຖະບານ ແລະ ເພື່ອຮັດແໜ້ນ, ພັດທະນາສາຍພົວພັນມິດຕະພາບອັນເປັນມູນເຊື້ອລະຫວ່າງສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ສາທາລະນະລັດປະຊາຊົນຈີນ ໃຫ້ກ້າວຂຶ້ນອີກບາດກ້າວໜຶ່ງ, ຊຸກຍູ້ການແລກປ່ຽນຮ່ວມມືລະຫວ່າງ ອົງການຕົວແທນທ້ອງຖິ່ນຂອງສອງຝ່າຍ, ຈັດຕັ້ງປະຕິບັດແຜນແມ່ບົດວ່າດ້ວຍການຮ່ວມມືລາວ-ຈີນ, ຈຶ່ງໄດ້ເປັນເອກະພາບກັນກ່ຽວກັບການສ້າງສາຍພົວພັນຮ່ວມມືໄມຕີຈິດ ແລະ ພ້ອມກັນລົງນາມໃນບົດບັນທຶກຊ່ວຍຈຳ ເຊິ່ງພິທີເຊັນບົດບັນທຶກຮ່ວມຄາດວ່າຈະເປີດຂຶ້ນໃນກາງເດືອນຕຸລາ 2022.

ກອງປະຊຸມຄັ້ງນີ້,ສພຂ ຮ່ວມກັບພະແນກການຕ່າງປະເທດແຂວງ ໄດ້ຄົ້ນຄວ້າ, ປຶກສາຫາລືແລກປ່ຽນບົດຮຽນ, ປະກອບຄຳຄິດເຫັນຢ່າງກົງໄປກົງມາ ເພື່ອກຽມຄວາມພ້ອມຮອບດ້ານ ເປັນຕົ້ນແມ່ນທາງດ້ານເນື້ອໃນ, ພິທີການອື່ນໆ ເພື່ອຮັບປະກັນໃຫ້ການເຊັນບົດບັນທຶກສຳຄັນດັ່ງກ່າວ ໄດ້ເປີດຂຶ້ນຕາມກຳນົດເວລາ, ຖືກຕ້ອງສອດຄ່ອງກັບລະບຽບການພົວພັນກັບຕ່າງປະເທດເວົ້າລວມເວົ້າສະເພາະແມ່ນການຮ່ວມມືລະຫວ່າງຄະນະປະຈຳ ສພຂ ຫລວງນ້ຳທາ ແຫ່ງ ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ແລະ ຄະນະກຳມະການປະຈຳສະພາຜູ້ແທນປະຊາຊົນແຂວງຢູນນານ ແຫ່ງ ສາທາລະນະລັດປະຊາຊົນຈີນ ໃຫ້ເປັນຮູບປະທຳຍິ່ງໆຂຶ້ນ.

(ນັກຂ່າວ ສພຂ ຫລວງນ້ຳທາ)

# ສຳເລັດການຜັນຂະຫຍາຍເນື້ອໃນຜົນສຳເລັດກອງປະຊຸມ




(ສພຊ) ໃນລະຫວ່າງວັນທີ 29 ກັນຍາ-2 ຕຸລາ 2022 ທ່ານ ທອງສີ ເສົາສຸລິພົມ ປະທານສະພາປະຊາຊົນແຂວງ (ສພຂ) ພ້ອມດ້ວຍທີມງານ ໄດ້ສຳເລັດການຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ແລະ ສພຂ ຊຸດທີ II ທີ່ເມືອງບຸນໃຕ້ ແລະ ເມືອງຍອດອູ, ແຂວງຜົ້ງສາລີ ປະກອບມີ 2 ຈຸດເທສະບານ (ສະໂມສອນເມືອງບຸນໃຕ້ ແລະ ເມືອງຍອດອູ) ແລະ 5 ບ້ານເປົ້າໝາຍຂອງເມືອງຍອດອູ (ບ້ານລານຕຸ້ຍ, ບ້ານແຊວຈ້າຍ, ບ້ານສົມເຮືອງ, ບ້ານຊຽງສ້ຽວ ແລະ ບ້ານສວຍງາມ ເມືອງຍອດອູ, ແຂວງຜົ້ງສາລີ); ມີຜູ້ເຂົ້າຮ່ວມຮັບຟັງຈຳນວນ 596 ທ່ານ ຍິງ 275 ທ່ານ.

ການເຄື່ອນໄຫວໃນຄັ້ງນີ້, ກໍເພື່ອຮັບປະກັນໃຫ້ຖັນແຖວພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ ແລະ ພໍ່ແມ່ປະຊາຊົນບັນເຜົ່າ ໃນ 7 ຈຸດ ຮັບຮູ້ຢ່າງກວ້າງຂວາງ, ທົ່ວເຖິງ ແລະ ຖືກຕ້ອງຕາມເປົ້າໝາຍ ແນໃສ່ເຮັດໃຫ້ບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ ສພຊ ແລະ ສະພາປະຊາຊົນແຂວງ ຮັບຮອງເອົາ ໄດ້ຮັບການຈັດຕັ້ງຜັນຂະຫຍາຍເຂົ້າໃນວຽກງານຕົວຈິງຂອງແຕ່ລະພາກສ່ວນ ທັງຮັບປະກັນໃຫ້ການເຄື່ອນໄຫວໃນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຊ ແລະ ສພຂ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ໂດຍສະເພາະການລາຍງານການເຄື່ອນໄຫວວຽກງານຂອງຕົນ ຕໍ່ຜູ້ມີສິດເລືອກຕັ້ງ ທັງເປັນການລົງພົບປະ ເພື່ອຮັບຟັງຄຳຄິດຄຳເຫັນ ແລະ ເກັບກຳສະພາບການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ແລະ ເພື່ອເປັນບ່ອນອີງໃຫ້ແກ່ການປັບປຸງອຳນາດລັດຂັ້ນທ້ອງຖິ່ນມີຄວາມເຂັ້ມແຂງ. ແນໃສ່ເຮັດໃຫ້ລະບົບການເມືອງຢູ່ແຂວງຜົ້ງສາລີມີສະຖຽນລະພາບ, ແຂວງຜົ້ງສາລີຄວາມມີຄວາມສະຫງົບ, ການພັດທະນາເສດຖະກິດ-ສັງຄົມມີການຫຍາຍຕົວ, ປະຊາຊົນບັນດາເຜົ່າມີຄວາມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ.

ເນື້ອໃນທີ່ນຳມາຜັນຂະຫຍາຍ ແລະ ໂຄສະນາເຜີຍແຜ່ຄັ້ງນີ້ ມີມະຕິຂອງ ສພຊ 21 ມະຕິ ແລະ ມະຕິຂອງ ສພຂ 10 ມະຕິ ເຊິ່ງໃນນີ້ປະກອບມີວຽກງານບຸກຄະລາກອນຂອງ ສພຊ ແລະ ສພຂ; ວຽກງານຂອງລັດຖະບານ ແລະ ຂອງອົງການປົກຄອງແຂວງ; ວຽກງານຂົງເຂດ ສພຊ ແລະ ສພຂ; ວຽກຂອງການສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຂອງແຂວງ.

ໂອກາດທີ່ເຄື່ອນໄຫວຈັດຕັ້ງຜັນຂະຫຍາຍ ແລະ ໂຄສະນາໃນຄັ້ງນີ້ທີມງານຍັງໄດ້ເອົາອຸປະກອນການຮຽນ ແລະ ເກືອຈຳນວນໜຶ່ງ ມູນຄ່າ 7.654.000 ກີບ, ໄປມອບໃຫ້ຄູ, ອາຈານ, ນ້ອງນ້ອຍນັກຮຽນ ແລະ ພໍ່ແມ່ປະຊາຊົນ.

(ນາງ ສຸກສົມພອນ ແກ້ວແສງພະຈັນ)

# ສະຫລຸບການຈັດຕັ້ງປະຕິບັດວຽກງານ 6 ເດືອນຕົ້ນປີ




(ສພຊ) ໃນວັນທີ 20 ກັນຍາ 2022 ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງງອຍ ແຂວງຫລວງພະບາງ ໄດ້ເປີດກອງປະຊຸມສະຫລຸບການຈັດຕັ້ງປະຕິບັດວຽກງານ ປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ໂດຍການເປັນປະທານຂອງທ່ານ ສົມພອນ ສີອຸດົມພັນ ຮອງປະທານສະພາປະຊາຊົນແຂວງ; ເຂົ້າຮ່ວມມີທ່ານ ບຸນເມືອງ ໄຊຍະສິດ ກຳມະການພັກແຂວງ, ເລຂາພັກເມືອງ, ເຈົ້າເມືອງງອຍ ແລະ ບັນດາທ່ານກຳມະການຄະນະປະຈຳພັກເມືອງ-ກຳມະການພັກເມືອງ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງງອຍ ຈຳນວນ 3 ທ່ານ ເຂົ້າຮ່ວມ.

ກອງປະຊຸມໄດ້ຮັບຟັງການລາຍງານການຈັດຕັ້ງປະຕິບັດ ວຽກງານປະຈຳ 6 ເດືອນຕົ້ນປີ ແລະ ທິດທາງແຜນການ 6 ເດືອນທ້າຍປີ 2022 ຂອງສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງງອຍ ແຂວງຫລວງພະບາງ ໂດຍທ່ານ ບຸນເຕັມ ອະໄພສະຫວັດ ຮອງເລຂາພັກເມືອງ, ຫົວໜ້າຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງງອຍ, ຈາກນັ້ນ, ບັນດາທ່ານສະມາຊິກສະພາປະຊາຊົນແຂວງປະຈຳເມືອງ ແລະ ບັນດາທ່ານທີ່ເຂົ້າຮ່ວມກໍໄດ້ຜັດປ່ຽນກັນປະກອບຄຳຄິດ-ຄຳເຫັນຕໍ່ບົດລາຍງານດັ່ງກ່າວ.

ຈາກນັ້ນ, ກອງປະຊຸມໄດ້ຮັບຟັງການໂອ້ລົມຈາກທ່ານ ສົມພອນ ສີອຸດົມພັນ ຕື່ມອີກ, ພາຍຫລັງທີ່ທ່ານໄດ້ໂອ້ລົມແລ້ວຕໍ່ກອງປະຊຸມແລ້ວ ທ່ານຍັງໄດ້ນຳເອົາເຄື່ອງຄອມພິວເຕີຕັ້ງໂຕະ ຈຳນວນ 1 ຊຸດ ມູນຄ່າ 4,7 ລ້ານກີບ ມອບໃຫ້ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ແລະ ທ່ານສຸວິລັດ ພັນສຸເດດ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ, ຮອງປະທານຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ ໄດ້ມອບອຸປະກອບກິລາ (ໝາກບານ) ຈຳນວນ 4 ຊຸດ ມູນຄ່າ 780.000 ກີບ ໃຫ້ແກ່ຫ້ອງການຊາວໜຸ່ມເມືອງ.

# ໜ່ວຍສະຫະພັນແມ່ຍິງ ສພຂປະເມີນແມ່ຍິງ 3 ດີ



(ສພຊ) ເພື່ອເຮັດຄຳຂວັນ ແລະ ຂໍ້ແຂ່ງຂັນ 3 ດີ ຂອງໜ່ວຍສະຫະພັນແມ່ຍິງສະພາປະຊາຊົນແຂວງ (ສພຂ) ຊຽງຂວາງ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຕິດພັນກັບຂະບວນການຮັກຊາດ ແລະ ພັດທະນາ ສະນັ້ນ, ໃນວັນທີ 28 ກັນຍາ 2022 ຢູ່ທີ່ ສພຂ ຊຽງຂວາງ, ໜ່ວຍສະຫະພັນແມ່ຍິງ ສພຂ ຊຽງຂວາງ ໄດ້ເປີດກອງປະຊຸມປະເມີນແມ່ຍິງ 3 ດີຂຶ້ນ ໂດຍການເປັນປະທານຂອງສະຫາຍນາງ ສົມພອນ ໂສພິລາວັນ ຮອງເລຂາໜ່ວຍພັກ ສພຂ, ຮອງປະທານ ສພຂ; ເຂົ້າຮ່ວມມີຄະນະໜ່ວຍແມ່ຍິງ, ຕາງໜ້າອົງການຈັດຕັ້ງມະຫາຊົນຂອງ ສພຂ ແລະ ບັນດາສະມາຊິກແມ່ຍິງ ສພຂ.

ໃນກອງປະຊຸມ, ໄດ້ຮັບຟັງຮ່າງບົດສະຫລຸບການເຄື່ອນໄຫວວຽກງານວຽກງານປະຈຳ 3 ເດືອນ (7.8.9) ຂອງໜ່ວຍ ສະຫະພັນແມ່ຍິງ ສພຂ ໄດ້ເອົາໃຈໃສ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກແມ່ຍິງ ໃຫ້ເຊື່ອໝັ້ນຕໍ່ການນຳພາຂອງພັກມີຄວາມສາມັກຄີພາຍໃນ, ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ, ເອກະສານທີ່ສຳຄັນຂອງອົງການຈັດຕັ້ງຕ່າງໆ, ໄດ້ຮັບຄຳຮ້ອງຂໍຄວາມເປັນທຳ ແລະ ຄຳສະເໜີຂອງປະຊາຊົນ, ຕ້ອນຮັບພົນລະເມືອງ, ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນບັນດາເຜົ່າ, ເປັນເສນາທິການເກັບກຳຂໍ້ມູນດ້ານຕ່າງໆ, ຂຽນຂ່າວອອກລາຍການວິທະຍຸກະຈາຍສຽງ, ໄດ້ພ້ອມກັນສຸມໃສ່ເຂົ້າຮ່ວມການສ້າງຂະບວນກິລາ, ຂະບວນການອອກແຮງງານຕ່າງໆ ຢູ່ພາຍໃນ ແລະ ຮ່ວມກັບພະແນກການອ້ອມຂ້າງແຂວງຕ້ອນຮັບວັນສຳຄັນຕ່າງໆ ແລະ ທິດທາງແຜນການໃນ 3 ເດືອນ (10.11.12) ປີ 2022 ຂອງໜ່ວຍສະຫະພັນແມ່ຍິງ ສພຂ ຈະສືບຕໍ່ສຶກສາອົບຮົມດ້ານການເມືອງ-ແນວຄິດໃຫ້ສະມາຊິກແມ່ຍິງ, ສືບຕໍ່ປັບປຸງສະມາຊິກພາຍໃນໃຫ້ເຂັ້ມແຂງ ເພື່ອກຽມພ້ອມຮັບໃຊ້ໜ້າທີ່ການເມືອງທີ່ພັກ-ລັດມອບໝາຍໃຫ້ພ້ອມກັນຈັດຕັ້ງປະຕິບັດເນື້ອໃນຂໍ້ແຂ່ງຂັນ 3 ດີ ຂອງສູນກາງແມ່ຍິງລາວວາງອອກໃຫ້ໄດ້ດີຂຶ້ນກວ່າເກົ່າ. ນອກນັ້ນ, ຍັງໄດ້ຜ່ານແຈ້ງການຂອງສະຫະພັນແມ່ຍິງແຂວງສະບັບເລກທີ 664, ລົງວັນທີ 6 ກໍລະກົດ 2022 ວ່າດ້ວຍການສະຫລຸບການຈັດຕັ້ງ ປະຕິບັດວຽກງານ 3 ດີ, ຜ່ານມະຕິຕົກລົງຂອງຄະນະເລຂາທິການສະພາປະຊາຊົນແຂວງ ວ່າດ້ວຍການແຕ່ງຕັ້ງ ຄະນະຮັບຜິດຊອບຊີ້ນຳລວມ ແລະ ຄະນະສັງລວມຄະແນນການປະເມີນຂໍ້ແຂ່ງຂັນ 3 ດີ ປະຈຳປີ 2022 ແລະ ຜ່ານເນື້ອໃນຂໍ້ແຂ່ງຂັນ 3 ດີ ແລະ ແນະນຳແບບຟອມການປະເມີນໃຫ້ສະມາຊິກແມ່ຍິງໄດ້ຮັບຮູ້ ແລະ ເຂົ້າໃຈໃນການປະເມີນ.

ໂອກາດດັ່ງກ່າວ, ສະຫາຍ ນາງ ສົມພອນ ໂສພິລາວັນ ສະຫາຍໄດ້ຍ້ອງຍໍຊົມເຊີຍຕໍ່ກັບຜົນງານທີ່ຍາດມາໄດ້ໃນໄລຍະຜ່ານມາ ໂດຍສະເພາະແມ່ນດ້ານການເມືອງແນວຄິດ, ດ້ານຄວາມສາມັກຄີພາຍໃນ, ດ້ານການປະຕິບັດໜ້າທີ່ວຽກງານ ແລະ ຄວາມຕັ້ງໜ້າຫ້າວຫັນໃນການປະກອບສ່ວນເຂົ້າໃນວຽກງານຂອງໜ່ວຍສະຫະພັນແມ່ຍິງ ກໍຄືການເຮັດວຽກງານຢູ່ໃນສະພາປະຊາຊົນແຂວງ ແລະ ສະຫາຍຍັງໄດ້ເນັ້ນຕື່ມອີກວ່າໃຫ້ສືບຕໍ່ເຊື່ອມຊຶມບັນດາມະຕິ, ຄຳສັ່ງ, ລັດຖະທຳມະນູນ ແລະ ກົດໝາຍຕ່າງໆ, ເພີ່ມທະວີເອົາໃຈໃສ່ໃນການເຮັດວຽກເປັນໝູ່ຄະນະ, ຮັກສາມູນຄວາມສາມັກຄີພາຍໃນ ແລະ ໃຫ້ອະນຸລັກຮັກສາຮີດຄອງປະເພນີອັນດີງາມຂອງຊາດເອົາໄວ້.

(ນາງ ສຸກສະຫວັນ ອິນທະແສງ)

# ຂົງເຂດເສດຖະກິດ ໄດ້ຮັບຟັງການເຜີຍແຜ່ເນື້ອໃນ ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3



(ສພຊ) ຕອນເຊົ້າວັນທີ 27 ກັນຍາ 2022 ທີ່ຫໍປະຊຸມໃຫຍ່ຂອງແຂວງອັດຕະປື, ສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 17 ແຂວງອັດຕະປື ໄດ້ເຜີຍແຜ່ເນື້ອໃນຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງສະພາແຫ່ງຊາດ (ສພຊ) ຊຸດທີ IX ນຳໂດຍທ່ານ ນາງ ມີນາພອນ ໄຊສົມພູ ປະທານຄະນະ ສສຊ ປະຈຳເຂດເລືອກຕັ້ງ 17, ປະທານ ສພຂ ອັດຕະປື ພ້ອມດ້ວຍຄະນະ ໂດຍໄດ້ຮັບການຕ້ອນຮັບ ແລະ ເຂົ້າຮ່ວມກອງປະຊຸມມີບັນດາທ່ານຮອງເຈົ້າແຂວງ, ຄະນະປະຈຳພັກແຂວງ, ກຳມະການພັກແຂວງ, ພະແນກການຂອງແຂວງ ພ້ອມດ້ວຍພະນັກງານ-ລັດຖະກອນອ້ອມຂ້າງແຂວງ ໃນຂົງເຂດເສດຖະກິດເຂົ້າຮ່ວມ.

ໃນວາລະກອງປະຊຸມ, ບັນດາທ່ານ ສສຊ ເຂດ 17 ໄດ້ຜັດປ່ຽນກັນເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ເປັນຕົ້ນແມ່ນເນື້ອໃນມະຕິກອງປະຊຸມ ສພຊ ວ່າດ້ວຍການຮັບຮອງເອົາບົດລາຍງານລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ 6 ເດືອນຕົ້ນປີ 2022 ແລະ ແຜນການ 6 ເດືອນທ້າຍປີ 2022; ກ່ຽວກັບຄວາມຄືບໜ້າໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ການແກ້ໄຂບັນຫາຢາເສບຕິດ; ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ ຄື: ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍຊັບສິນຂອງລັດ ແລະ ກົດໝາຍວ່າດ້ວຍແຮ່ທາດ; ກ່ຽວກັບທິດທາງການປະຕິຮູບລັດວິສາຫະກິດ ລວມທັງການປັບປຸງໂຄງສ້າງຂອງທະນາຄານທຸລະກິດລັດ; ກ່ຽວກັບການຈັດຕັ້ງປະຕິບັດແຜນການທ່ອງທ່ຽວສີຂຽວ ແລະ ການເປີດປະເທດຕິດພັນກັບການປ້ອງກັນ ແລະ ຮັບມືການແຜ່ລະບາດຂອງພະຍາດໂຄວິດ-19; ກ່ຽວກັບການຈັດຕັ້ງປະຕິບັດບັນດາຄາດໝາຍໃນຂົງເຂດສຶກສາທິການ ແລະ ກິລາ ໂດຍສະເພາະການປັບປຸງຄຸນນະພາບລະບົບການຮຽນ-ການສອນທຸກຂັ້ນ ທຸກສາຍ ໃນໄລຍະໃໝ່ ແລະ ການຄຸ້ມຄອງວຽກງານກິລາ-ກາຍະກຳ ແລະ ຮັບຮອງເອົາການເລືອກຕັ້ງປະກອບອົງການກວດສອບແຫ່ງລັດ, ຮັບຮອງເອົາການສະເໜີແຕ່ງຕັ້ງຮອງນາຍົກລັດຖະມົນຕີ ແລະ ສະມາຊິກລັດຖະບານ, ພ້ອມກັນນີ້ ສສຊ ເຂດ 17 ຍັງໄດ້ນຳເອົາເນື້ອໃນຜົນສຳເລັດຂອງກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຂ ອັດຕະປື ຊຸດທີ II ເຜີຍແຜ່ໃຫ້ຜູ້ເຂົ້າຮ່ວມຮັບຮູ້ຕື່ມອີກ. ນອກນັ້ນ, ຜູ້ເຂົ້າຮ່ວມຍັງໄດ້ມີຄຳສະເໜີ ແລະ ແລກປ່ຽນຄຳຄິດຄຳເຫັນ.

ທັງນີ້, ກໍເພື່ອເຮັດໃຫ້ພະນັກງານ-ລັດຖະກອນ ຮັບຮູ້ ແລະ ເຂົ້າໃຈຕໍ່ການນຳພາຂອງພັກ, ລະບຽບກົດຫມາຍຂອງລັດ ໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ ກໍຄືຂອງແຂວງ ແລະ ແນໃສ່ຮັບຮູ້ ແລະ ເຂົ້າໃຈຕໍ່ລະບົບກົງຈັກການຈັດຕັ້ງ, ພາລະບົດບາດ, ສິດ ແລະ ໜ້າທີ່ຂອງ ສພຊ ກໍຄື ສພຂ ແລະ ເນື້ອໃນວຽກງານສຳຄັນທີ່ໄດ້ພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນເທື່ອທີ 3 ຂອງ ສພຊ ຊຸດທີ IX ພ້ອມກັນນຳເອົານິຕິກຳໃຕ້ກົດໝາຍ ກໍຄືມະຕິທີ່ໄດ້ຮັບຮອງໄປຈັດຕັ້ງເຜີຍແຜ່ ແລະ ຈັດຕັ້ງປະຕິບັດເຂົ້າໃນວຽກງານຂອງຕົນຢ່າງເປັນຮູບປະທຳ ແລະ ມີຜົນສຳເລັດ ເຮັດໃຫ້ພໍ່ແມ່ປະຊາຊົນຫລຸດພົ້ນອອກຈາກຄວາມທຸກຍາກເປັນກ້າວໆ.

(ວິນັດ)

# ສພຂ ຫົວພັນ-ແທັງຮວ່າ ພົບປະແລກປ່ຽນບົດຮຽນຮ່ວມກັນ




(ສພຊ) ເພື່ອເປັນການເສີມຂະຫຍາຍສາຍພົວພັນທີ່ເປັນມູນເຊື້ອ, ຄວາມສາມັກຄີແບບພິເສດອ້າຍນ້ອງ ແລະ ການຮ່ວມມືຮອບດ້ານລະຫວ່າງລາວ-ຫວຽດນາມທີ່ມີມາແຕ່ດຶກດຳບັນໃຫ້ເຕີບໃຫຍ່ຂະຫຍາຍຕົວ, ເຕັມໄປດ້ວຍຄວາມໝາຍອັນເລິກເຊິ່ງ ແລະ ເກີດດອກອອກຜົນ ກໍຄືຫົວພັນ-ແທັງຮວ່າເວົ້າລວມ ເວົ້າສະເພາະ ສພຂ ຫົວພັນ ແລະ ສພຂ ແທັງຮວ່າ ສສ.ຫວຽດນາມ ໃຫ້ນັບມື້ກ້າວເຂົ້າສູ່ລວງເລິກ ແລະ ເປັນການສືບຕໍ່ຜັນຂະຫຍາຍບົດບັນທຶກຊ່ວຍຈຳທີ່ກອງປະຊຸມພົບປະແລກປ່ຽນບົດຮຽນການເຄື່ອນໄຫວລະຫວ່າງ ສພຂ ຫົວພັນແຫ່ງ ສປປລາວ ແລະ ສພຂ ແທັງຮ່ວາ ແຫ່ງ ສສ.ຫວຽດນາມທີ່ໄດ້ລົງນາມຄັ້ງວັນທີ 20 ເມສາ 2019 ທີ່ນະຄອນຊຳເຊີນ ແຂວງແທັງຮ່ວາ ສສ.ຫວຽດນາມ.

ໃນລະຫວ່າງວັນທີ 28-30 ກັນຍາ 2022 ສພຂ ຫົວພັນ ແລະ ສພຂ ແທັງຮວ່າ ໄດ້ຈັດກອງປະຊຸມພົບປະແລກປ່ຽນບົດຮຽນຮ່ວມກັນຢູ່ທີ່ ນະຄອນເຊີມເຊີນ ແຂວງແທັງຮວ່າ ສສ.ຫວຽດນາມ ເຊິ່ງຝ່າຍລາວນຳໂດຍ ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ ກຳມະການສຳຮອງສູນກາງພັກ, ຮອງເລຂາພັກແຂວງ, ປະທານຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງທີ 8 ແຂວງຫົວພັນ ທັງເປັນປະທານ ສພຂ ແລະ ຝ່າຍຫວຽດນາມ ສະຫາຍ ລ້າຍເທ້ ຫງວຽນ ຮອງເລຂາຜູ້ປະຈຳການປະທານຄະນະສະມາຊິກສະພາແຫ່ງຊາດ ແຂວງແທັງຮວ່າ ສສ.ຫວຽດນາມ.

ໃນວາລະກອງປະຊຸມທັງສອງຝ່າຍໄດ້ຜັດປ່ຽນກັນລາຍງານໂດຍຫຍໍ້ ກ່ຽວກັບການພັດທະນາເສດຖະກິດ-ສັງຄົມຂອງແຂວງ ແລະ ການເຄື່ອນໄຫວວຽກງານຂອງ ສພຂ ໃຫ້ກັນແລະກັນໄດ້ຮັບຊາບ. ຈາກນັ້ນ, ຜູ້ເຂົ້າຮ່ວມກອງປະຊຸມທັງສອງຝ່າຍກໍໄດ້ພ້ອມກັນສົນທະນາແລກປ່ຽນບົດຮຽນນຳກັນຫລາຍດ້ານ ເພື່ອເຮັດໃຫ້ການເຄື່ອນໄຫວວຽກງານຂອງສອງ ສພຂ ມີຄວາມເຕີບໃຫ່ຍເຂັ້ມແຂງຂຶ້ນເລື້ອຍໆ.

ໃນຕອນທ້າຍຂອງກອງປະຊຸມ, ພົບປະແລກປ່ຽນທັງສອງຝ່າຍຍັງໄດ້ເຊັນບົດບັນທຶກຮ່ວມກັນ ແລະ ໂອກາດນີ້ທາງຄະນະຍັງໄດ້ໄປຢ້ຽມຢາມ, ທ່ຽວຊົມ ເຂດເສດຖະກິດພິເສດຫງີເຊີນແຂວງແທັງຮ່ວາຕື່ມອີກ.

(ນັກຂ່າວ ສພຂ ຫົວພັນ)

# ສສຊ ເຂດ 7 ເຄື່ອນໄຫວ ແລະ ເຮັດວຽກຢູ່ເມືອງຫົງສາ



(ສພຊ) ຕອນເຊົ້າຂອງວັນທີ 18 ກັນຍາ 2022 ທີມງານສະມາຊິກສະພາແຫ່ງຊາດ (ສສຊ) ປະຈຳເຂດເລືອກຕັ້ງທີ 7 ແຂວງໄຊຍະບູລີ ໄດ້ເຄື່ອນໄຫວ ແລະ ເຮັດວຽກຢູ່ເມືອງຫົງສາ ແຂວງໄຊຍະບູລີ ເພື່ອຊຸກຍູ້ການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງຫົງສາ ເຊິ່ງນຳໂດຍທ່ານ ເພັງນິລັນ ຄຳພັນເພັງ ສສຊ ປະຈຳເຂດເລືອກຕັ້ງ, ປະທານສະພາປະຊາຊົນແຂວງ ພ້ອມດ້ວຍຄະນະ ສສຊ ປະຈຳເຂດເລືອກຕັ້ງ ແລະ ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງຂອງເມືອງເຂົ້າຮ່ວມ.

ໃນໂອກາດນີ້, ຄະນະ ສສຊ ແລະ ສະມາຊິກສະພາປະຊາຊົນແຂວງ ໄດ້ເຄື່ອນໄຫວຕິດຕາມກວດກາຊຸກຍູ້ໂຄງການກໍ່ສ້າງພື້ນຖານໂຄງລ່າງຂອງເມືອງ ເຊັ່ນ ໂຄງການກໍ່ສ້າງຕ້ານເຈື່ອນທ່າຊ່ວງເຮືອເມືອງຫົງສາ, ໂຄງການກໍ່ສ້າງຮ່ອງລະບ່າຍນ້ຳ-ທາງຍ່າງ ແລະ ໂຄງການກໍ່ສ້າງອາຄານຫ້ອງນອນຄົນເຈັບໂຮງໝໍຊຸມຊົນເມືອງ. ຈາກນັ້ນ, ຍັງໄດ້ໄປຢ້ຽມຢາມອ້າຍນ້ອງທະຫານຊາຍແດນ ຢູ່ກອງຮ້ອຍຊາຍແດນ 153 ແລະ ມອບເຂົ້າສານຈຳນວນ 96 ກິໂລ ມູນຄ່າ 1 ລ້ານກວ່າກີບ, ອາຫານແຫ້ງ ແລະ ອຸປະກອນກິລາ ລວມມູນຄ່າ 2,3 ລ້ານກວ່າກີບ.

(ກິດຕິສັກ ບົວໄລ)

108 ສາລະ

# ວັນຄູແຫ່ງຊາດ

# ດອກຫຍ້າ

ມວນມະນຸດທີ່ຢູ່ໃນໂລກນີ້ ລ້ວນແຕ່ມີການພັດທະນາຕົນເອງໃຫ້ມີຄວາມກ້າວໜ້າໄປຢ່າງບໍ່ຢຸດຢັ້ງ ອັນເຮັດໃຫ້ສັງຄົມມະນຸດ ມີການປ່ຽນຈາກລະບອບນີ້ ໄປສູ່ລະບອບສັງຄົມອື່ນ ເຊິ່ງໃນຂະບວນວິວັດພັດທະນາການເຫລົ່ານັ້ນ ລ້ວນແຕ່ມີຄູເປັນບົດບາດປະກອບສ່ວນອັນສຳຄັນ ເຊິ່ງບໍ່ມີໃຜ ຫລື ບຸກຄົນໃດ ຈະປະຕິເສດໄດ້; ສະນັ້ນ, ໃນບົດຄວາມນີ້ ຈະພາທ່ານຜູ້ອ່ານ ມາຮູ້ກ່ຽວກັບວັນຄູແຫ່ງຊາດ.

ຄຳວ່າ "ຄູ" ແມ່ນຄຳເວົ້າທີ່ສືບທອດກັນຫລາຍເຊັ່ນຄົນ ຄູ ໝາຍເຖິງຄົນທີ່ມີຄວາມຮູ້, ຄວາມສາມາດ ແລະ ປະສົບການ ທີ່ສາມາດໄປຖ່າຍທອດຄວາມຮູ້, ຄວາມສາມາດ ແລະ ປະສົບການນັ້ນໄປສູ່ຜູ້ອື່ນ ໂດຍຮູບແບບການຖ່າຍທອດຄວາມຮູ້ຈາກຜູ້ຮູ້ໄປສູ່ຜູ້ບໍ່ຮູ້ ເອີ້ນວ່າ: ການຮຽນ-ການສອນ ສຳລັບປະເທດລາວເຮົາ ເມື່ອເວົ້າເຖິງການຮຽນ-ການສອນ ຫລື ເວົ້າລວມແມ່ນການສຶກສາ ຖ້າຈະປຽບທຽບກັບການຂະຫຍາຍຕົວຂອງໂລກ ພວກເຮົາຍັງຢູ່ຫ່າງໄກຈາກໂລກຫລາຍ.

ໃນສະຕະວັດທີ XIV ເຈົ້າຟ້າງູ່ມ ກະສັດອົງທຳອິດຂອງລາວ ໄດ້ນຳເອົາສາສະໜາພຸດ ເຂົ້າມາເຜີຍແຜ່ ຈຶ່ງເຮັດໃຫ້ປະເທດເຮົາມີວັດວາອາຮາມ ເຊິ່ງຖືວ່າເປັນໂຮງຮຽນແຫ່ງທຳອິດ ຂອງປະຊາຊົນລາວ ອາດເວົ້າໄດ້ວ່າ ອິດທິພົນທາງສາສະໜາ ໄດ້ສິ່ງຜົນສະທ້ອນເຖິງປະຊາຊົນລາວ ຫລາຍທີ່ສຸດ ແລະ ແກ່ຍາວມາເປັນເວລາຫລາຍຮ້ອຍປີ ເຊິ່ງເບື້ອງຕົ້ນແມ່ນພໍ່ແມ່ເປັນຄູ ເພື່ອສິດສອນລູກຂອງຕົນຢູ່ໃນຄອບຄົວ ໂດຍເອົາປະສົບການຂອງຕົນຢູ່ໃນຊີວິດປະຈຳວັນ, ຂະນົບທຳນຽມຮີດຄອງປະເພນີ, ຄວາມເຊື່ອຖືມາເປັນການສຶກສາອົບຮົມລູກຫລານຂອງຕົນ ເພື່ອໃຫ້ຮູ້ຈັກອອກແຮງງານ ແລະ ກາຍເປັນຜູ້ສືບທອດ ທີ່ບໍລິສຸດຂອງພໍ່ແມ່ ຕາມຄວາມເຊື່ອຖື ແລະ ເປົ້າໝາຍສູງໄປກວ່ານັ້ນ ແມ່ນສົ່ງລູກເຂົ້າໄປບວດ ຫລື ເປັນສັງກະລີຢູ່ວັດ ເພື່ອຮ່ຳຮຽນຂຽນອ່ານ, ຮຽນຮູ້ຫລັກວິຊາ ແລະ ລຶດເດດມົນຄາຖາຕາມຄວາມເຊື່ອຖື ໂດຍແມ່ນຄູບາອາຈານເປັນຜູ້ສິດສອນ ແລະ ສິ່ງຄວາມຮູ້ເຊັ່ນ: ຈາລຶກະທຳ, ການວາດແຕ້ມ, ການປັ້ນ, ການຄວັດລະບາຍສີ, ຢາພື້ນເມືອງ, ວິຊາອາຄົມ ຕະຫລອດເຖິງລະບຽບວິໄນຄຳສອນຕ່າງໆ ຂອງພະພຸດທະເຈົ້າ ໃນຮູບແບບການຮຽນ-ການສອນຢູ່ວັດໃນເວລານັ້ນ ໂດຍຖືເອົາຊັ້ນຈາກການບວດ ມາເປັນການຕີເປັນລາຄາ ເຖິງລະດັບຄວາມຮູ້.

ພາຍຫລັງທີ່ຈັກກະພັດຕ່າງດ້າວ ເຂົ້າມາຮຸກຮານໃນປີ 1893-1905 ທົ່ວປະເທດມີໂຮງຮຽນ ພຽງແຕ່ສອງແຫ່ງ ຄື: ຫລວງພະບາງ ແລະ ວຽງຈັນ ຄົນລາວທີ່ໄດ້ເຂົ້າຮຽນແມ່ນມີໜ້ອຍ ໃນຈຳນວນດັ່ງກ່າວ ໄດ້ມີຄົນລາວຊື່ທ້າວ ຄຳ ໄດ້ຮຽນຈົບຫ້ອງທີ I (ປ.6) ແລະ ປີ 1907 ທ້າວ ຄຳ ໄດ້ເຂົ້າຮ່ວມຮັບການອົບຮົມຄູ ເຊິ່ງຖືວ່າເປັນຄັ້ງທຳອິດໃນປະຫວັດສາດຂອງຊາດລາວ ທີ່ໄດ້ມີການຈັດອົບຮົມຄູ ພາຍຫລັງການອົບຮົມສຳເລັດ ມາເຖິງວັນທີ 7 ຕຸລາ 1907 ທ້າວຄຳເລີ່ມເປັນຄູສອນ ຍ້ອນພວກລ່າເມືອງຂຶ້ນຝຣັ່ງ ເຫັນອິດທິພົນຂອງພະສົງໃນວຽກງານການສຶກສາ ພວກເຂົາຈຶ່ງຫັນນະໂຍບາຍ ເພື່ອຜັນຂະຫຍາຍໂຮງຮຽນໃຫ້ກວ້າງອອກ ດ້ວຍຮູບການເປີດໃຫ້ມີໂຮງຮຽນສ້າງຄູສົງຂຶ້ນໃນປີ 1907 ທີ່ວັດຈັນ ເຊິ່ງປະກອບມີພະສົງ 50 ກວ່າອົງໄດ້ເຂົ້າຮຽນ ທ້າວ ຄຳ ກໍເປັນຄູສອນຢູ່ໂຮງຮຽນສ້າງຄູສົງແຫ່ງນັ້ນ ຍ້ອນຈິດໃຈຮັກຊາດຂອງນາຍຄູຄຳ ໃນເວລາສິດສອນຢູ່ໂຮງຮຽນສ້າງຄູສົງ ນາຍຄູຄຳໄດ້ເອົາໃຈໃສ່ສຶກສາອົບຮົມ ໃຫ້ພະສົງທີ່ຈະເປັນຄູໃຫ້ມີຄວາມຮັກຊາດ; ປີ 1913 ຄູຄຳ ໄດ້ສອນຢູ່ໂຮງຮຽນຕັບໂຟແຮງ (ປີແອ ຕັບໂຟແຮງ) ລວມມີຄູລາວ 3 ຄົນ ມາເຖິງກາງເດືອນພະຈິກ ປີ 1920 ຂະບວນການຕໍ່ສູ້ຂອງປະຊາຊົນລາວ ນຳໂດຍນາຍຄູຄຳໄດ້ລະເບີດຂຶ້ນຢູ່ວຽງຈັນ ການຕໍ່ສູ້ໄດ້ດຳເນີນໄປຢ່າງຮຸນແຮງ ຄູຄຳໄດ້ຖືກຈັບ ແລະ ນຳຕົວໄປຂັງຄຸກ; ພາຍຫລັງຖືກຄຸມຂັງໄດ້ໄລຍະໜຶ່ງ ນາຍຄູຄຳໄດ້ໂຕນອອກຈາກຄຸກ ແລ້ວຂ້າມແມ່ນ້ຳຂອງໄປອາໄສຢູ່ນຳພີ່ນ້ອງທີ່ບາງກອກ (ປະເທດໄທ); ປີ 1949 ນາຍຄູຄຳໄດ້ເຈັບປ່ວຍ ແລະ ເສຍຊີວິດຍ້ອນພະຍາດຂອງເພິ່ນ ຢູ່ທີ່ວັດສີທາຣາມ (ປະເທດໄທ).

ພາຍຫລັງປະຊາຊົນລາວໄດ້ລຸກຮື້ຂຶ້ນ ຍຶດອຳນາດໃນວັນທີ 12 ຕຸລາ 1945 ເປັນຕົ້ນມາ ການສຶກສາມີລັກສະນະຊາດ ຈຶ່ງຄ່ອຍໆປະກົດຕົວເປັນຮູບເປັນຮ່າງຂຶ້ນມາ; ການຕໍ່ສູ້ຂອງປະຊາຊົນລາວບັນດາເຜົ່າ ເພື່ອຕ້ານກັບລັດທິລ່າເມືອງຂຶ້ນແບບໃໝ່ຂອງຈັກກະພັດຜູ້ຮຸກຮານ ໄດ້ຮັບໄຊຊະນະ ແລະ ໄດ້ຮັບການສະຖາປານາຂຶ້ນເປັນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃນວັນທີ 2 ທັນວາ 1975 ເຫດການປະຫວັດສາດດັ່ງກ່າວ ກໍໄດ້ເປັນເງື່ອນໄຂເອື້ອອຳນວຍໃຫ້ແກ່ການສຶກສາຂອງລາວ ໄດ້ຮັບການພັດທະນາ, ໂຮງຮຽນໄດ້ຂະຫຍາຍຕົວຢ່າງໄວວາ ຈາກຕົວເມືອງໄປສູ່ຊົນນະບົດ; ລູກຫລານຂອງປະຊາຊົນບັນດາເຜົ່າ ໄດ້ເຂົ້າຮ່ຳຮຽນຢູ່ໂຮງຮຽນ ໂດຍມີຄູທີ່ມີນ້ຳໃຈຮັກຫອມປະເທດຊາດ, ມີຄວາມຮູ້, ຄວາມສາມາດ ເພື່ອປະກອບສ່ວນກໍ່ສ້າງປະເທດຊາດ ນຳເອົາຄວາມສົມບູນພູນສຸກ ມາສູ່ປະຊາຊົນບັນດາເຜົ່າ ດັ່ງນັ້ນ, ເພື່ອລະນຶກເຖິງຄຸນງາມຄວາມດີຂອງຄູ ສັງຄົມຈຶ່ງໄດ້ມີການກຳນົດໃຫ້ມີວັນຄູແຫ່ງຊາດ ໂດຍກຳນົດເອົາວັນເຂົ້າເປັນຄູຂອງນາຍຄູຄຳ ເຊິ່ງແມ່ນຄູຜູ້ທີ່ມີສັນຊາດລາວຄົນທຳອິດ ເປັນວັນຄູແຫ່ງຊາດ ໂດຍໄດ້ຖືກປະກາດໃຊ້ ແລະ ຕັ້ງໃນວັນທີ 7 ຕຸລາ 1994 ເປັນຕົ້ນມາຈົນເຖິງປັດຈຸບັນ ໂດຍພາຍໃຕ້ການຊີ້ນຳ-ນຳພາຂອງພັກ ໃນທຸກໆປີ ເມື່ອເຖິງວັນທີ 7 ຕຸລາ ຈະຈັດໃຫ້ມີພິທີການເລົ່າຄືນມູນເຊື້ອວັນຄູແຫ່ງຊາດ ຂຶ້ນໃນທຸກໂຮງຮຽນທົ່ວປະເທດ ເພື່ອອວຍພອນຄູຜູ້ໃຫ້ຄວາມຮູ້.

ສາລາກະວີ

## ຈາລຶກຄູຄົນທຳອິດ

# ໂດຍ: ພັນນາລີ ກ້ອນພັນທະວົງ

❊ ຄູຄືຜູ້ຄິດຄົ້ນ
ເປັນຜູ້ນຳພາທາງ
ເປັນຜູ້ນຳພາດ້ານ
ປອງສ້າງຄົນຮອບດ້ານ

ເຝິກຫລໍ່ຫລອມປັນຍາ
ຫ່າງໄກຄວາມປູ້
ວິຊາການຕ່າງໆ
ສະຫລາດຮູ້ຊູ່ແນວ ແທ້ນາ!

❊ ເພິ່ນວ່າ ໝຶກປາແດກຈໍ້າ
ຈີ່ກະປູຍັງມີຄອງ
ຄົນຊິມີປັນຍາໃຊ້
ເປັນເບົ້າຫລອມຫລໍ່ປັ້ນ

ຍັງປຸງແຕ່ງຕາມຄູ
ວາດແວວວາງໄວ້
ອາໄສຄູສ້າງກໍ່
ຄົມຊັ້ນສາດຕະສິນ ທ່ານເອີຍ!

❊ ຄູຄຳ ເຄີຍກໍ່ຕັ້ງ
ໝາຍອຸທິດຊີວາ
ຝຸງສັດຕູວຽນຂ້າ
ເອົາສຽງປືນແຕກກ້ອງ

ແບບຢ່າງມີມາ
ຊ່ວຍປະຊາຮຽນຮູ້
ອາສາຕົນຕາຍສ່ຽງ
ເປັນສຽງຮ້ອງກໍ່ຮຸ່ນຄົນ ແທ້ແລ້ວ!

❊ 7 ຕຸລາວຽນຮອບແລ້ວ
ມິອາດໄລລືມຫລົງ
28 ພັນສາວຽນເຂົ້າ
ຂີດໝາຍຍໍຍົກຍ້ອງ

ຈາລຶກຄຸນຄູ
ຊື່ຕົງຄົງໝັ້ນ
1994 ຕັ້ງກໍ່
ປະກາດກ້ອງຊື່ແມ່ພິມ ທ່ານເອີຍ!

❊ ມາລາເບີຍເບີກແຍ້ມ
ສະດຸດດີຄູລາວ
ສຸຂະວັນນະແຂງແຮງເຂັ້ມ
ດວງດາວລະດາດຟ້າ

ແຊມຊໍ່ສະຫລັບສີ
ຈຶ່ງສຳລານມະໂນແມ້ງ
ສະເໜີດອມໂດຍດັ່ງ
ນະພາແຈ້ງບໍ່ຫລ່າສີ ຄູເອີຍ!



## ສຸກສະບາຍຫາຍໂຣຄາ

## ປະໂຫຍດ ແລະ ຂໍ້ຄວນລະວັງ ກ່ຽວກັບໝາກເລັ່ນ

ແປ ແລະ ຮຽບຮຽງໂດຍ: ສາວແວ່ນ



**• ດີຕໍ່ສຸຂະພາບຜິວ**

ໝາກເລັ່ນ ອຸດົມໄປດ້ວຍວິຕາມິນຊີ ທີ່ຊ່ວຍຮັກສາສຸຂະພາບຜິວໃຫ້ດີຂຶ້ນ ອີງຕາມການຄົ້ນຄວ້າທີ່ຕີພິມໃນວາລະສານ Nutrients ໃນ 2017 ໃນຫົວຂໍ້ວິຕາມິນຊີມີບົດບາດຕໍ່ສຸຂະພາບຜິວແນວໃດ? ພົບວ່າວິຕາມິນຊີ ມີບົດບາດສຳຄັນໃນການສ້າງຄໍລະເຈນ, ທາດໂປຣຕີນຊະນິດໜຶ່ງທີ່ມີບົດບາດສຳຄັນໃນການເສີມສ້າງສຸຂະພາບຂອງຜິວ ຊ່ວຍໃຫ້ຜິວຮັກສາຄວາມຢືດຢຸ່ນ ແລະ ອາດຈະຊ່ວຍປ້ອງກັນຮອຍຫ່ຽວກ່ອນໄວອັນຄວນ.

ນອກຈາກນີ້, ໝາກເລັ່ນ ຍັງມີສານໄລໂຄປີນ ເຊິ່ງແມ່ນສານຕ້ານອະນຸມູນອິດສະຫລະ ທີ່ຊ່ວຍປົກປ້ອງຜິວຈາກລັງສີຢູວີໃນແສງແດດ; ອີງຕາມການສຶກສາປີ 2001 ທີ່ພິມເຜີຍແຜ່ໃນວາລະສານໂພຊະນາການ ທີ່ສຶກສາເຖິງປະສິດທິຜົນຂອງການກິນໝາກເລັ່ນ ເພື່ອປ້ອງກັນການເກີດຜື່ນແດງຈາກແສງແດດ ໂດຍການໃຫ້ຜູ້ທົດລອງກິນນ້ຳໝາກເລັ່ນເຂັ້ມຂຸ້ນ40 ກລາມຕໍ່ມື້ ເປັນເວລາ 10 ອາທິດ ພົບວ່າຜື່ນແດງຈາກແສງແດດ ຫລຸດລົງປະມານ 40% ເມື່ອທຽບກັບຜູ້ທີ່ບໍ່ໄດ້ກິນໝາກເລັ່ນເຂັ້ມຂຸ້ນ.

**• ຫລຸດຜ່ອນຄວາມສ່ຽງຂອງພະຍາດຫົວໃຈ**

ສານຕ້ານອະນຸມູນອິດສະຫລະຕ່າງໆເຊັ່ນ ໄລໂຄປີນ ແລະ ວິຕາມິນຊີ ຊ່ວຍຫລຸດຄວາມສ່ຽງຂອງພະຍາດຫົວໃຈ ແລະ ຫລອດເລືອດໄດ້ ຈາກບົດລາຍງານທົບທວນການວິໄຈທີ່ສຶກສາກ່ຽວກັບຄວາມສຳພັນຂອງໝາກເລັ່ນ ແລະ ສຸຂະພາບຂອງຫົວໃຈ ແລະ ຫລອດເລືອດ ໃນປີ 2003 ທີ່ຕີພິມໃນວາລະສານ Critical Reviews in Food Science and Nutrition ພົບວ່າ ສານຕ້ານອະນຸມູນອິດສະຫລະເຫລົ່ານີ້ ຈະຊ່ວຍປົກປ້ອງເສັ້ນເລືອດຫົວໃຈຈາກການຫລຸ້ຍຫ້ຽນທີ່ນຳໄປສູ່ການເສື່ອມສະພາບຂອງເຊວ.

ໝາກເລັ່ນ ຍັງມີໂພແທດຊຽມ ທີ່ອາດຈະຊ່ວຍຫລຸດຜ່ອນປະລິມານຂອງຄໍເລດເຕີຣໍ ທີ່ບໍ່ດີ, ຊ່ວຍຄວບຄຸມການເຕັ້ນຂອງຫົວໃຈໃຫ້ປົກກະຕິ ແລະ ອາດຈະຊ່ວຍຫລຸດຄວາມດັນເລືອດສູງໄດ້ ເຊິ່ງເປັນປັດໄຈສ່ຽງທີ່ສຳຄັນຂອງພະຍາດຫົວໃຈ ແລະ ຫລອດເລືອດນຳອີກ.

**• ອາດຈະຊ່ວຍປ້ອງກັນມະເຮັງ**

ໄລໂຄປີນ ພົບເຫັນຢູ່ໃນໝາກເລັ່ນ ມີສ່ວນຊ່ວຍປ້ອງກັນມະເຮັງຕ່ອມອັນທະ ອີງຕາມການສຶກສາກ່ຽວກັບປະສິດທິພາບຂອງໄລໂຄປີນໃນການສະກັດກັ້ນມະເຮັງຕ່ອມອັນທະ ການສຶກສາທີ່ຕີພິມໃນວາລະສານ Biomedicine & Pharmacotherapy ໃນປີ 2020 ພົບວ່າ ໄລໂຄປີນສາມາດຊ່ວຍຢັບຢັ້ງການຈະເລີນເຕີບໂຕ ແລະ ການຂະຫຍາຍຕົວຂອງເຊວມະເຮັງຕ່ອມອັນທະ ແລະ ຊ່ວຍກະຕຸ້ນໃຫ້ຈຸລັງມະເຮັງຕ່ອມອັນທະຕາຍໄວຂຶ້ນ ດັ່ງນັ້ນ, ມັນອາດຈະເປັນປະໂຫຍດຕໍ່ການປິ່ນປົວ ຫລື ປ້ອງກັນມະເຮັງຕ່ອມລູກໝາກໄດ້ ແຕ່ແນວໃດກໍຕາມ ຕ້ອງມີການສຶກສາຕື່ມອີກ ເພື່ອກຳນົດປະສິດທິພາບ ທີ່ຈະແຈ້ງຊັດເຈນ ວ່າການກິນໝາກເລັ່ນມີຜົນດີ ເພື່ອປ້ອງກັນມະເຮັງຕ່ອມລູກໝາກ ຫລື ມະເຮັງອື່ນໆ.

**• ຂໍ້ຄວນລະວັງໃນເວລາກິນໝາກເລັ່ນ**

ໝາກເລັ່ນ ໂດຍສະເພາະແມ່ນໝາກເລັ່ນສົດ ພວກມັນອາດຈະປົນເປື້ອນດ້ວຍສານເຄມີ ແລະ ຢາຂ້າແມງໄມ້ ສະນັ້ນ, ຄວນເລືອກຊື້ຈາກແຫລ່ງທີ່ໄວ້ໃຈໄດ້ ແລະ ຄວນລ້າງໃຫ້ສະອາດທຸກຄັ້ງ ກ່ອນຮັບປະທານ; ນອກນີ້, ຍັງຄວນຫລີກລ່ຽງການກິນໃບໝາກເລັ່ນ ເນື່ອງຈາກມັນເປັນພິດຕໍ່ຮ່າງກາຍ ອາດຈະເຮັດໃຫ້ເກີດອາການຕ່າງໆເຊັ່ນ: ຖອກທ້ອງ, ຮາກ, ປາກ ແລະ ຄໍລະຄາຍເຄືອງ, ເຈັບຫົວ, ວິນຫົວ ຖ້າຮ້າຍແຮງ ອາດຈະເຮັດໃຫ້ເສຍຊີວິດໄດ້ ຫາກກິນໃນປະລິມານຫລາຍ.

ຄົນເຈັບທີ່ເປັນພະຍາດໝາກໄຂ່ຫລັງ ຄວນລະມັດລະວັງ ເນື່ອງຈາກໝາກເລັ່ນ ມີໂພແທດຊຽມຫລາຍ ອາດສົ່ງຜົນໃຫ້ຫົວໃຈເຕັ້ນບໍ່ສະໝ່ຳສະເໝີ ແລະ ອາດເຮັດໃຫ້ຫົວໃຈວາຍໄດ້

ແມ່ຍິງຖືພາ ແລະ ໃຫ້ນົມລູກ ບໍ່ມີການສຶກສາທີ່ສະແດງໃຫ້ເຫັນເຖິງອັນຕະລາຍ ຂອງການກິນໝາກເລັ່ນໃນແມ່ຍິງຖືພາ ແລະ ໃຫ້ນົມລູກ ແຕ່ແນວໃດກໍຕາມ ຄວນກິນໃນປະລິມານທີ່ພໍດີ ແລະ ກິນອາຫານໃຫ້ຄົບ 5 ໝູ່ ເພື່ອຮັບປະກັນວ່າຮ່າງກາຍໄດ້ຮັບສານອາຫານທີ່ສົມບູນ.

www.sanook.com

# ກົດໝາຍວ່າດ້ວຍການໂທລະຄົມມະນາຄົມ (ສະບັບປັບປຸງ)

ຕໍ່ຈາກສະບັບກ່ອນ...

**ພາກທີ V**

**ການດຳເນີນທຸລະກິດ ໂທລະຄົມມະນາຄົມ**

**ມາດຕາ 25 (ປັບປຸງ) ປະເພດ ການດຳເນີນທຸລະກິດ**

ການດຳເນີນທຸລະກິດໂທລະຄົມມະນາຄົມ ຢູ່ ສປປລາວ ມີ ສອງປະເພດ ຄື:

1. ການໃຫ້ບໍລິການໂທລະຄົມມະນາຄົມ;
2. ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມ.

**ມາດຕາ 26 (ໃໝ່) ການໃຫ້ບໍລິການໂທລະຄົມມະນາຄົມ**

ການໃຫ້ບໍລິການໂທລະຄົມມະນາຄົມ ແມ່ນ ຮູບແບບດຳເນີນທຸລະກິດໃຫ້ບໍລິການ ໜຶ່ງ ຫຼື ຫຼາຍ ກິດຈະການໂທລະຄົມມະນາຄົມ ທີ່ມີເຄືອຂ່າຍ ຫຼື ບໍ່ມີເຄືອຂ່າຍ ເປັນຂອງຕົນເອງ.

ການໃຫ້ບໍລິການໂທລະຄົມມະນາຄົມ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການສື່ສານເຄື່ອນທີ່;
2. ການບໍລິການ ໂທລະສັບຕັ້ງໂຕະ;
3. ການບໍລິການ ອິນເຕີເນັດ;
4. ການສື່ສານຜ່ານດາວທຽມ;
5. ການສື່ສານການສຳຫຼວດ ແລະ ຄົ້ນຫາຕຳແໜ່ງ;
6. ການບໍລິການ ລະບົບຄົມມະນາຄົມອັດສະລິຍະ;
7. ການບໍລິການ ອິນເຕີເນັດໂດຍໃຊ້ສະຖານີລອຍຟ້າລະດັບສູງ;
8. ການບໍລິການ ໂທລະສັບມືຖືໂດຍນຳໃຊ້ສະຖານີລອຍຟ້າລະດັບສູງ;
9. ການບໍລິການເສີມ;
10. ການບໍລິການ ແອບພລິເຄເຊິນ;
11. ການບໍລິການ ອິນເຕີເນັດສັບພະສິ່ງ;
12. ການບໍລິການໂທລະຄົມມະນາຄົມອື່ນ.

**ມາດຕາ 27 (ໃໝ່) ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມ**

ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມ ແມ່ນ ຮູບແບບການດຳເນີນທຸລະກິດ ເພື່ອໃຫ້ບໍລິການ ໜຶ່ງ ຫຼື ຫຼາຍ ກິດຈະການ ທີ່ຕິດພັນກັບການດຳເນີນທຸລະກິດ ດ້ານໂທລະຄົມມະນາຄົມ.

ການສະໜອງສິ່ງອຳນວຍຄວາມສະດວກດ້ານໂທລະຄົມມະນາຄົມ ປະກອບດ້ວຍກິດຈະການ ດັ່ງນີ້:

1. ການໃຫ້ເຊົ່າໂຄງລ່າງພື້ນຖານໂທລະຄົມມະນາຄົມ;
2. ການປະກອບ, ຜະລິດ ແລະ/ຫຼື ຈຳໜ່າຍ ອຸປະກອນໂທລະຄົມມະນາຄົມ;
3. ການຕິດຕັ້ງ-ສ້ອມແປງ ອຸປະກອນໂທລະຄົມມະນາຄົມ;
4. ການນຳເຂົ້າ-ສົ່ງອອກ ອຸປະກອນໂທລະຄົມມະນາຄົມ;
5. ການໃຫ້ຄຳປຶກສາດ້ານໂທລະຄົມມະນາຄົມ;
6. ການບໍລິການສູນຂໍ້ມູນ;

ການສະໜອງສິ່ງອຳນວຍຄວາມສະດວກ ດ້ານໂທລະຄົມມະນາຄົມອື່ນ.

**ມາດຕາ 28 (ປັບປຸງ) ການຂໍອະນຸຍາດດຳເນີນທຸລະກິດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງດຳເນີນທຸລະກິດກ່ຽວກັບໂທລະຄົມມະ ນາຄົມ ໃຫ້ຍື່ນຄຳຮ້ອງຂໍອະນຸຍາດນຳຫ້ອງການບໍລິການການລົງທຶນປະຕູດຽວ ຫຼື ຂະແໜງການອຸດສາຫະກຳ ແລະ ການຄ້າ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ແລະ ກົດໝາຍວ່າດ້ວຍວິສາ ຫະກິດ. ພາຍຫຼັງໄດ້ຮັບໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດແລ້ວ ຕ້ອງຂໍອະນຸຍາດດຳເນີນທຸລະກິດນຳຂະແໜງການເຕັກໂນໂລຊີແລະການສື່ສານ.

ການລົງທຶນໃນທຸລະກິດໂທລະຄົມມະນາຄົມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 25 ຂອງກົດໝາຍສະບັບນີ້ ມີອາຍຸບໍ່ເກີນ ສິບຫ້າປີ ແລະ ສາມາດຂໍໃໝ່ໄດ້.

**ມາດຕາ 29 (ໃໝ່) ເງື່ອນໄຂການດຳເນີນທຸລະກິດ**

ການດຳເນີນທຸລະກິດໂທລະຄົມມະນາຄົມ ມີເງື່ອນໄຂ ດັ່ງນີ້:

1. ມີໃບອະນຸຍາດລົງທຶນ, ໃບທະບຽນວິສາຫະກິດ;
2. ມີທຶນທີ່ເໝາະສົມກັບແຕ່ລະກິດຈະການ;
3. ມີບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ;
4. ມີບຸກຄະລາກອນທີ່ມີຄວາມຮູ້ ແລະ ປະສົບການ ດ້ານໂທລະຄົມມະນາຄົມ ຫຼື ໄອທີ ຢ່າງໜ້ອຍ ສອງປີ;
5. ມີທີ່ຕັ້ງສຳນັກງານ ຢູ່ ສປປລາວ;
6. ໄດ້ຮັບການອະນຸຍາດນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ຈາກຂະແໜງການເຕັກໂນໂລຊີ ແລະ ການສື່ສານ ສຳລັບປະເພດທຸລະກິດທີ່ຕ້ອງໄດ້ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ;
7. ມີເຄືອຂ່າຍໂທລະຄົມມະນາຄົມເປັນຂອງຕົນເອງ ສຳລັບຜູ້ໃຫ້ບໍລິການກິດຈະການບໍລິ ການອິນເຕີເນັດທົ່ວປະເທດ.

**ມາດຕາ 30 (ໃໝ່) ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດ**

ເອກະສານປະກອບການຂໍອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ ມີ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມ ຕາມການກຳນົດຂອງ ກະຊວງເຕັກໂນໂລຊີ ແລະ ການສື່ສານ;
2. ສຳເນົາຖ່າຍໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ;
3. ກົດລະບຽບຂອງວິສາຫະກິດ;
4. ສັນຍາຮ່ວມທຸລະກິດ ຖ້າມີ;
5. ຊີວະປະຫວັດຫຍໍ້ຂອງຜູ້ສ້າງຕັ້ງ;
6. ໃບຢັ້ງຢືນຖານະການເງິນ;
7. ບົດວິພາກເສດຖະກິດ-ເຕັກນິກ ແລະ/ຫຼື ແຜນດຳເນີນທຸລະກິດ.

**ມາດຕາ 31 (ໃໝ່) ການພິຈາລະນາ**

ພາຍຫຼັງຂະແໜງການເຕັກໂນໂລຊີ ແລະ ການສື່ສານ ໄດ້ຮັບເອກະສານປະກອບການຂໍອະນຸ ຍາດດຳເນີນທຸລະກິດຢ່າງຖືກຕ້ອງ ແລະ ຄົບຖ້ວນແລ້ວ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມ ພາຍໃນເວລາ ສາມສິບວັນ ນັບແຕ່ວັນໄດ້ຮັບເອກະສານ ເປັນຕົ້ນໄປ.

ໃນກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມໄດ້ ກໍຕ້ອງແຈ້ງ ເຫດຜົນຢ່າງເປັນລາຍລັກອັກສອນໃຫ້ຜູ້ຂໍອະນຸຍາດຊາບ.

ກະຊວງເຕັກໂນໂລຊີ ແລະ ການສື່ສານ ເປັນຜູ້ກຳນົດ ຂັ້ນຕອນ ແລະ ເງື່ອນໄຂລະອຽດກ່ຽວກັບການອະນຸຍາດດຳເນີນທຸລະກິດໂທລະຄົມມະນາຄົມແຕ່ລະກິດຈະການ.

**ມາດຕາ 32 (ໃໝ່) ອາຍຸໃບອະນຸຍາດ**

ໃບອະນຸຍາດຂອງການດຳເນີນທຸລະກິດໂທລະຄົມມະນາຄົມ ມີອາຍຸໜຶ່ງປີ ແລະ ສາມາດຕໍ່ໄດ້.

ການຕໍ່ໃບອະນຸຍາດດຳເນີນທຸລະກິດ ຕ້ອງດຳເນີນກ່ອນ ສາມສິບວັນກ່ອນວັນໝົດອາຍຸ ແລະ ຕ້ອງປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ;
2. ສຳເນົາຖ່າຍໃບອະນຸຍາດລົງທຶນ ແລະ ໃບທະບຽນວິສາຫະກິດ;
3. ສຳເນົາຖ່າຍໃບອະນຸຍາດດຳເນີນທຸລະກິດ;
4. ສຳເນົາຖ່າຍໃບຢັ້ງຢືນການມອບພັນທະອາກອນປະຈຳປີ;
5. ສຳເນົາຖ່າຍໃບອະນຸຍາດນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ;
6. ບົດລາຍງານການເຄື່ອນໄຫວທຸລະກິດຜ່ານມາ ແລະ ແຜນການເຄື່ອນໄຫວໃນຕໍ່ໜ້າ.

ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຕ້ອງພິຈາລະນາຕໍ່ໃບອະນຸຍາດພາຍໃນເວລາ ສິບວັນລັດຖະການ ນັບແຕ່ວັນໄດ້ຮັບເອກະສານຄົບຖ້ວນ ແລະ ຖືກຕ້ອງ ເປັນຕົ້ນໄປ.

**ມາດຕາ 33 (ໃໝ່) ການໂຈະໃບອະນຸຍາດ**

ການດຳເນີນທຸລະກິດໂທລະຄົມມະນາຄົມ ຈະຖືກໂຈະ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
2. ດຳເນີນທຸລະກິດບໍ່ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ ທີ່ໄດ້ຮັບອະນຸຍາດ;
3. ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງທີ່ມີລັກສະນະບໍ່ຮ້າຍແຮງ;
4. ສ້າງຜົນເສຍຫາຍຕໍ່ເສດຖະກິດ-ສັງຄົມ ແລະ ສິ່ງແວດລ້ອມ;
5. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ກ່ອນການໂຈະໃບອະນຸຍາດ ໃນກໍລະນີທີ 2 ຫາ 5 ຂະແໜງການເຕັກໂນໂລຊີ ແລະ ການສື່ສານ ຕ້ອງແຈ້ງເຕືອນຜູ້ໃຫ້ບໍລິການໂທລະຄົມມະນາຄົມ ເພື່ອປັບປຸງແກ້ໄຂ ຕາມການແຈ້ງເຕືອນ.

**ມາດຕາ 34 (ໃໝ່) ການຍົກເລີກໃບອະນຸຍາດ**

ການດຳເນີນທຸລະກິດໂທລະຄົມມະນາຄົມ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ມີການສະເໜີ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ;
2. ບໍ່ປັບປຸງແກ້ໄຂຕາມສາເຫດທີ່ມີການໂຈະ;
3. ມີຄຳຕັດສິນ ໃຫ້ຍຸບເລີກວິສາຫະກິດ ຫຼື ໃຫ້ລົ້ມລະລາຍ;
4. ນຳໃຊ້ຊັບພະຍາກອນໂທລະຄົມມະນາຄົມ ໂດຍບໍ່ໄດ້ຮັບອະນຸຍາດ;
5. ລະເມີດກົດໝາຍ, ລະບຽບການຢ່າງຮ້າຍແຮງ ແລະ ສ້າງຜົນເສຍຫາຍຢ່າງຫຼວງຫຼາຍຕໍ່ເສດຖະກິດ-ສັງຄົມ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ;
6. ມີກໍລະນີອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ພາກທີ VI**

**ສິດ, ພັນທະ ຂອງຜູ້ໃຫ້ບໍລິການ ແລະ ຜູ້ໃຊ້ບໍລິການ**

**ມາດຕາ 35 (ປັບປຸງ) ສິດ ຂອງຜູ້ໃຫ້ບໍລິການໂທລະຄົມມະນາຄົມ**

ຜູ້ໃຫ້ບໍລິການໂທລະຄົມມະນາຄົມ ມີສິດ ດັ່ງນີ້:

1. ສະເໜີຕໍ່ກະຊວງເຕັກໂນໂລຊີ ແລະ ການສື່ສານ ກ່ຽວກັບການນຳໃຊ້ຊັບພະຍາກອນ ໂທລະຄົມມະນາຄົມ, ການເຊື່ອມຕໍ່ເຄືອຂ່າຍ, ການຢັ້ງຢືນຄຸນນະພາບ ແລະ ມາດຕະຖານຂອງການບໍລິການໂທລະຄົມມະນາຄົມ;
2. ຂະຫຍາຍເຄືອຂ່າຍໂທລະຄົມມະນາຄົມຂອງຕົນ ຕາມການອະນຸຍາດ;
3. ປະກອບ, ຜະລິດ, ສົ່ງອອກ, ນຳເຂົ້າ, ຈຳໜ່າຍ ແລະ ຕິດຕັ້ງອຸປະກອນໂທລະຄົມມະ ນາຄົມຕາມປະເພດ ການດຳເນີນທຸລະກິດໂທລະຄົມມະນາຄົມ;
4. ນຳໃຊ້, ສົ່ງຄືນ, ປ່ຽນແທນ, ໃຫ້ເຊົ່າ ຊັບພະຍາກອນໂທລະຄົມມະນາຄົມ ຕາມການເຫັນດີ ແລະ ອະນຸຍາດ ຂອງກະຊວງເຕັກໂນໂລຊີ ແລະ ການສື່ສານ;
5. ສະເໜີຕໍ່ພາກສ່ວນທີ່ກ່ຽວຂ້ອງ ກ່ຽວກັບການນຳໃຊ້ສະຖານທີ່, ທີ່ດິນ, ຖະໜົນ, ຮ່ອງລະບາຍນ້ຳ, ອາຄານ, ສິ່ງກໍ່ສ້າງ ແລະ ອື່ນໆ ໂດຍສອດຄ່ອງກັບກົດໝາຍ ແລະ ລະບຽບການ;
6. ສະເໜີ ຂໍນຳໃຊ້ໂຄງລ່າງພື້ນຖານໂທລະຄົມມະນາຄົມ ນຳຜູ້ໃຫ້ບໍລິການໂທລະຄົມມະນາຄົມອື່ນ;
7. ສະເໜີ ກະຊວງເຕັກໂນໂລຊີ ແລະ ການສື່ສານ ເພື່ອພິຈາລະນາປັບປຸງອັດຕາຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມຂອງຊາດ ໃນແຕ່ລະໄລຍະ;
8. ໂຈະ ຫຼື ຍົກເລີກ ການບໍລິການ ແກ່ຜູ້ໃຊ້ບໍລິການໂທລະຄົມມະນາຄົມ ທີ່ບໍ່ຊຳລະຄ່າບໍລິການ ຫຼື ນຳໃຊ້ການບໍລິການ ທີ່ບໍ່ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
9. ສະເໜີໂຈະ ຫຼື ຍົກເລີກ ການດຳເນີນທຸລະກິດ;

ອ່ານຕໍ່ສະບັບໜ້າ...

## ຊີວິດຕິດຫລຸມ: ໝົເຄາະຄອຍໂຊກ




**ໂດຍ: ດົ້ນກົບເມກ**

ຫລຸມພາງຂອງຊີວິດທີ່ຫລົງຍຶດຕິດພຽງແຕ່ໝໍເຄາະເຂັນ ແລະ ຄອຍໂຊກວາດສະໜາ ຖືເປັນຊີວິດທີ່ມີສັດທາ ແຕ່ຂາດປັນຍາ, ພຸດທະສາສະໜາຈຶ່ງເນັ້ນສອນປັນຍາກຳກັບຕະຫລອດເວລາ, ການແຂວນພະຫ້ອຍຄໍ ບໍ່ສາມາດເປັນເຄື່ອງຄ້ຳປະກັນໃຫ້ຊີວິດລອຍໄດ້ ຫລື ໂຊກຈະລອຍມາຫາ ກໍບໍ່ແມ່ນແຕ່ການຫ້ອຍພະໃນຄໍທີ່ຖືກຕ້ອງມັນເປັນພຽງສິ່ງເຕືອນໃຫ້ມີສະຕິປັນຍາບໍ່ໃຫ້ປະໝາດ-ບໍ່ໃຫ້ຫລົງໂຕ ໃຫ້ລະນຶກເຖິງຄວາມດີ ມີສິນທຳໃນການກະທຳ ເຊິ່ງຖ້າວ່າຄົນໃດຫາກແຂວນພະເຕັມຄໍ ແຕ່ມີພຶດຕິກຳສໍ້ໂກງບຽດບຽນ-ຂົ່ມເຫັງຄົນອື່ນ ພະທີ່ຫ້ອຍຄໍກໍບໍ່ສາມາດປົກປ້ອງຄົນເຮັດຜິດໄດ້. ດັ່ງນັ້ນ, ຊີວິດຈະກ້າວໜ້າຈຶ່ງເປັນຊີວິດທີ່ບໍ່ລໍຄອຍວາດສະໜາ, ພຸດທະສາສະໜາກໍສອນໄວ້ແຈ້ງວ່າ: ວາດສະໜາແປວ່າ ການກະທຳຈົນເຄີຍຊິນເປັນນິດໄສ, ຄົນເຮັດດີເປັນນິດໄສປະຈຳ ຄົນຜູ້ນັ້ນມີວາດສະໜາດີ ຢ່າເຂົ້າໃຈວ່າ: ວາດສະໜາຈະຕ້ອງລໍຄອຍ ຕົກລົງມາຈາກຟ້າ ແຕ່ວາດສະໜາທີ່ແທ້ຈິງໃນຊີວິດຕ້ອງສ້າງມັນຂຶ້ນມາດ້ວຍການກະທຳ.

ຄົນສ່ວນຫລາຍນັບຖືສາສະໜາພຽງແຕ່ຢາກໃຫ້ຫາຍເຄາະເຂັນ ແລະ ພົບໂຊກລາບ ນັບຖືສາສະໜາພຽງແຕ່ມີຈິດສຳນຶກວ່າມີສິ່ງຍຶດໝ່ຽວທາງຈິດໃຈ ເຊິ່ງຄວາມໝາຍແທ້ຈິງຕ້ອງໄດ້ໄຈ້ແຍກອອກໃຫ້ແຈ້ງວ່າ: ຍຶດໝ່ຽວຈິດໃຈແບບດຶງລົງ ຫລື ດຶງຂຶ້ນ, ຍຶດໝ່ຽວຈິດໃຈແບບດຶງລົງໝາຍວ່າດຶງໃຫ້ໝົກຈົມຢູ່ກັບການຫວັງເພິ່ງໂຊກ-ເພິ່ງວາດສະໜາລອຍລົມ ຈຶ່ງຫລົງເກາະຍຶດໝ່ຽວແບບເພີດເພີນຈົນຈິດໃຈ-ປັນຍາບໍ່ຈະເລີນ.

ຄວາມໝາຍທີສອງ ຍຶດໝ່ຽວຈິດໃຈແບບດຶງຂຶ້ນ ຄືມີທີ່ເກາະທີ່ເພິ່ງເພື່ອໃຫ້ຊີວິດມີແຮງ-ມີທິດເຍືອງທາງດ້ວຍຫລັກທຳມະ (ຄຳສອນ) ນຳມາປະຕິບັດໃຫ້ເກີດສະຕິປັນຍາ. ດັ່ງນັ້ນ, ຄົນສ່ວນໃຫຍ່ຄວນທຳຄວາມເຂົ້າໃຈໃຫ້ຖືກຕ້ອງແທ້ຈິງ ບໍ່ແມ່ນເປັນຊາວພຸດພຽງແຕ່ຈົດບອກໄວ້ໃນປຶ້ມສຳມະໂນຄົວວ່າເປັນຊາວພຸດເທົ່ານັ້ນ.

# UNCTAD ເຕືອນເສດຖະກິດໂລກກຳລັງຖົດຖອຍ ຈະຂະຫຍາຍຕົວພຽງ 2,5%

ແປ ແລະ ຮຽບຮຽງ: ທະນາກອນ



ອີງຕາມການລາຍງານເມື່ອອາທິດຜ່ານມາ ໃຫ້ຮູ້ວ່າ: ກອງປະຊຸມສະຫະປະຊາຊາດວ່າດ້ວຍການຄ້າແລະການພັດທະນາ (UNCTAD) ໄດ້ເປີດເຜີຍບົດລາຍງານວ່າ ການບັງຄັບໃຊ້ນະໂຍບາຍທາງດ້ານການເງິນຂອງກຸ່ມປະເທດທີ່ພັດທະນາແລ້ວ ມີຄວາມສ່ຽງທີ່ຈະຊຸກຍູ້ໃຫ້ເສດຖະກິດໂລກເຂົ້າສູ່ພາວະຖົດຖອຍ ແລະ ພາວະການຂະຫຍາຍຕົວຊ້າລົງສ້າງຄວາມເສຍຫາຍທີ່ຮ້າຍແຮງຍິ່ງກວ່າວິກິດການເງິນເມື່ອປີ 2008 ແລະ ຜົນກະທົບຈາກການແຜ່ລະບາດຂອງພະຍາດໂຄວິດ-19.

ບົດລາຍງານວ່າດ້ວຍການຄ້າ ແລະ ການພັດທະນາ ປະຈຳປີ 2022 ຂອງ UNGTAD ລະບຸວ່າ ການປັບເພີ່ມອັດຕາດອກເບ້ຍທີ່ວ່ອງໄວ ແລະ ການໃຊ້ມາດຕະການທາງດ້ານການເງິນໃນກຸ່ມປະເທດທີ່ພັດທະນາແລ້ວ ບວກກັບວິກິດຈາກການແຜ່ລະບາດຂອງພະຍາດໂຄວິດ-19 ແລະ ສະຖານະການໂລກໃນປັດຈຸບັນ ເຮັດໃຫ້ການຫລຸດລົງຂອງເສດຖະກິດທົ່ວໂລກກາຍເປັນພາວະຂາລົງ ໂດຍບໍ່ມີທ່າອ່ຽງຫລຸດລະດັບລົງຕາມທີ່ຄາດຄະເນໄວ້, ບັນດາທະນາຄານກາງບໍ່ສາມາດບັນລຸເປົ້າໝາຍອັດຕາເງິນເຟີ້ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດທີ່ມີຄຸນນະພາບທີ່ດີຂຶ້ນຢ່າງຕໍ່ເນື່ອງໃນໄລຍະທີ່ສະວັດຂອງອັດຕາດອກເບ້ຍຕ່ຳເປັນພິເສດ.

ການໃຊ້ມາດຕະການທາງດ້ານການເງິນເກີນຄວາມຈຳເປັນ ອາດຈະນຳມາສູ່ພາວະການຂະຫຍາຍຕົວ ແລະ ຄວາມບໍ່ໝັ້ນຄົງທາງດ້ານເສດຖະກິດ ຂະນະທີ່ເກີດພາວະຄ່າຈ້າງຫລຸດລົງ ການແປປວນທາງດ້ານການເງິນລວມເຖິງການສະໜັບສະໜູນ ແລະ ການປະສານງານແບບພະຫຸພາຄີບໍ່ພຽງພໍ.

UNCTAD ໄດ້ຄາດຄະເນວ່າ ເສດຖະກິດໂລກຈະຂະຫຍາຍຕົວພຽງ 2,5% ໃນປີນີ້ ໂດຍການຫລຸດລົງຂອງເສດຖະກິດທີ່ເກີດຂຶ້ນພ້ອມກັບກຳລັງສົ່ງຜົນກະທົບຕໍ່ພາກພື້ນ ໂດຍສະເພາະກຸ່ມປະເທດທີ່ກຳລັງພັດທະນາ ເຊິ່ງຄາດວ່າອັດຕາການຂະຫຍາຍຕົວສະເລ່ຍຈະຫລຸດລົງຕ່ຳກວ່າ 3% ສົ່ງຜົນກະທົບຕໍ່ການເງິນພາກລັດ ແລະ ເອກະຊົນລວມເຖິງໂອກາດໃນການຈ້າງງານແມ່ນຫຍຸ້ງຍາກຫລາຍຂຶ້ນ.

ເລຂາທິການ UNCTAD ກ່າວວ່າ: ຍັງພໍມີເວລາທີ່ຈະເຮັດໃຫ້ເສດຖະກິດໂລກບໍ່ຕົກຕ່ຳສູ່ພາວະຖົດຖອຍດ້ວຍເຄື່ອງມືທີ່ຈະຫລຸດອັດຕາເງິນເຟີ້ ແລະ ສະໜັບສະໜູນກຸ່ມທີ່ໄດ້ຮັບຜົນກະທົບທັງໝົດ ອີກຢ່າງໜຶ່ງແນວທາງຂອງມາດຕະການໃນປັດຈຸບັນກຳລັງສົ່ງຜົນເສຍຕໍ່ກຸ່ມທີ່ໄດ້ຮັບຜົນກະທົບຫລາຍທີ່ສຸດ ໂດຍສະເພາະກຸ່ມປະເທດກຳລັງພັດທະນາ ແລະ ເພີ່ມຄວາມສ່ຽງນຳພາເສດຖະກິດເຂົ້າສູ່ພາວະຖົດຖອຍທົ່ວໂລກ.

**ແຫລ່ງຂ່າວ: laophattananews**




# ມາຣົກ ອອກໃບອະນຸຍາດ ການຜະລິດກັນຊາ ຊຸດທຳອິດ

ແປ ແລະ ຮຽບຮຽງ: ນາກ ເມືອງມະໂນ

*ລັດຖະບານຂອງປະເທດມາຣົກ ໄດ້ອອກໃບອະນຸຍາດ 10 ສະບັບທຳອິດ ສຳລັບການນຳໃຊ້ກັນຊາ ໃນອຸດສາຫະກຳ ແລະ ຢາ ລວມທັງການສົ່ງອອກ ຫລັງຈາກທີ່ກົດໝາຍໄດ້ຜ່ານມະຕິໃນປີກາຍນີ້.*

ອີງຕາມການລາຍງານຂ່າວໃນວັນທີ 6 ຕຸລານີ້ ໃຫ້ຮູ້ວ່າ: ຊາວກະສິກຳທີ່ລວມຕົວກັນເປັນກຸ່ມສະຫະກອນຢູ່ເຂດພູດອຍທາງພາກເໜືອຂອງມາຣົກ ເຊິ່ງລວມມີອັລໂຮເຊມາ, ເຕົານາເຕ ແລະ ເຊັບຊາອູນ ຈະໄດ້ຮັບການອະນຸຍາດໃຫ້ປູກກັນຊາເທື່ອລະກ້າວ ເພື່ອຕອບສະໜອງຄວາມຕ້ອງການຂອງຕະຫລາດທີ່ຖືກຕ້ອງຕາມກົດໝາຍ.

ມາຣົກ ມີການປູກກັນຊາທີ່ຜິດກົດໝາຍຢ່າງແຜ່ຫລາຍ ແລະ ກົດໝາຍສະບັບໃໝ່ທີ່ລັດຖະສະພາຂອງມາຣົກ ໄດ້ມີມະຕິຮັບຮອງເອົາໃນປີຜ່ານມານີ້ ເຊິ່ງບໍ່ສາມາດນຳໃຊ້ ກັນຊາເພື່ອຄວາມມ່ວນຊື່ນໄດ້.

ນອກຈາກນັ້ນ, ກົດໝາຍດັ່ງກ່າວ ຍັງແນໃສ່ປັບປຸງລາຍຮັບຂອງຊາວກະສິກຳ ແລະ ຄຸ້ມຄອງເຂົາເຈົ້າຈາກຜູ້ຄ້າຢາເສບຕິດ ເຊິ່ງຄວບຄຸມການຄ້າກັນຊາ ແລະ ສົ່ງອອກກັນຊາໄປທະວີບເອີຣົບຢ່າງຜິດກົດໝາຍ.

**ແຫລ່ງຂ່າວ: REUTERS**


















**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ຄຳວິສັນ ແກ້ວສຸວັນ

**ຫົວໜ້າບັນນາທິການ**
ທ່ານ ປອ. ພົດສະໄໝ ບຸນວິໄລ
ທ່ານ ຂັນທະວີ ວົງພະຈັນ

**ກອງບັນນາທິການ**
ທ່ານ ນາງ ກົງໃຈ ແສງອຳພັນ
ທ່ານ ນາງ ສຸພາວັນ ທອມສະນິດ
ທ່ານ ນາງ ປາກາລັກ ພິມມີໄຊ

**ອອກແບບຈັດໜ້າ**
ທ່ານ ນາງ ກຸກກິກ ບຸດດາໄຊ
ທ່ານ ສົມນຶກ ແກ້ວໄຊຍະຈັກ